# ແຄນ ແລະ ສຽງແຄນ



ກົງເດືອນ ເນດຕະວົງ

ໂຄງການເກັບກຳຂໍ້ມູນດົນຕຣີພື້ນເມືອງລາວ
ກະຊວງຖະແຫລງຂ່າວແລະວັດທະນະທຳ, ຫໍສະໝຸດແຫ່ງຊາດລາວ

*ARCHIVES OF TRADITIONAL MUSIC IN LAOS*
*Ministry of Information and Culture, National Library of Laos*

ວຽງຈັນ ສ.ປ.ປ. ລາວ *2002*

# ແຄນແລະສຽງແຄນ

ໂດຍ: *ກິ່ງເດືອນ ເນດຕະວົງ*


| | |
|---|---|
| ຄະນະຈັດທຳ | *ກິ່ງເດືອນ ເນດຕະວົງ* |
| | *ບົວໄຂ ເພັງພະຈັນ* |
| | *ຈັນທະລາ ໄຊຍະສິດ* |
| | *ຂັນທະມາລີ ຍັງນຸວົງ* |
| | *ແສງ ພະເມືອງ* |
| | *ທອງບາງ ທອມສົມບັດ* |
| | *ສີວິໄລ ໂສພາ* |
| ບັນນາທິການ | *ດຣ. ກິຊາ ແຍະນີເຈນ* (G. Jähnichen) |
| | *ບົວໄຂ ເພັງພະຈັນ* |



ສະຫງວນລິຂະສິດ © 2002 *ກິ່ງເດືອນ ເນດຕະວົງ*



| | |
|---|---|
| ທະບຽນອະນຸຍາດ | ທບ: 41 / ພຈ / 2002 |
| ພິມຄັ້ງທີ 1 | 2002 ຫໍສະໝຸດແຫ່ງຊາດ |
| ຈຳນວນ | 2000 ຫົວ |
| ຮູບປະກອບ | *ກິ່ງເດືອນ ເນດຕະວົງ* |
| | *ດຣ. ກິຊາ ແຍະນີເຈນ (G. Jähnichen)* |
| | *ທອງບາງ ທອມສົມບັດ* |
| ພິມທີ່ | ໂຮງພິມໜຸ່ມລາວ, ວຽງຈັນ, ສ.ປ.ປ. ລາວ 2002 |

# ຄຳນຳ

ໜັງສືເຫຼັ້ມນີ້, ຕາມທັດສະນະຂອງຂ້າພະເຈົ້າ ເຫັນວ່າ ມີປະໂຫຍດໃນການຄົ້ນຄວ້າ ແລະຮ່ຳຮຽນສຳລັບຜູ້ທີ່ມີຄວາມຢາກຮູ້ກ່ຽວກັບແຄນ, ເພາະໜັງສືເຫຼັ້ມນີ້ໄດ້ບັນຈຸເນື້ອໃນກ່ຽວກັບການລິເລີ່ມສ້າງແຄນມາ ຈົນຮອດການນຳໃຊ້ເຂົ້າໃນຊີວິດຂອງສັງຄົມຄົນລາວ ສືບທອດມາຈົນຮອດຍຸກສະໄໝໃໝ່ໃນສະຕະວັດທີ 21 ແລະຄິດວ່າຈະສືບຕໍ່ໄປຄູ່ກັບຊາດລາວ, ເມື່ອໃດຍັງມີເຊື້ອຊາດລາວຢູ່ໃນຜືນແຜ່ນດິນນີ້, ແຄນແລະສຽງແຄນກໍ່ຍັງມີຄຸນຄ່າແລະຄົງຢູ່ຄູ່ກັນໄປ.

ໜັງສືເຫຼັ້ມນີ້ອ່ານງ່າຍ ຈະເຮັດໃຫ້ຜູ້ອ່ານສາມາດຄົ້ນຄວ້າຕໍ່ສິ່ງທີ່ເຫັນວ່າຍັງຂາດເຂີນ ຊຶ່ງຜູ້ຂຽນບໍ່ທັນໄດ້ຄົ້ນເຫັນ, ເພາະມັນເປັນພຽງການຄົ້ນຄວ້າເບື້ອງຕົ້ນເທົ່ານັ້ນ, ຍັງມີຫລາຍວິທີ, ຫລາຍອັນທີ່ຢາກຈະຄົ້ນຕໍ່ໃຫ້ມັນຄົບ, ຈຶ່ງຂໍຝາກຝັງໄວ້ໃຫ້ກັບນັກຄົ້ນຄວ້າຜູ້ອື່ນສືບຕໍ່.

ສ່ວນພາກ II ໄດ້ແນະນຳວິທີການຮຽນເປົ່າແຄນດ້ວຍຕົນເອງມີທັງການແນະນຳຮຽນແບບທຳມະດາ (ໄຮ້ຄູສອນ), ເບິ່ງຕາມຄຳແນະນຳແລະຕົວເລກໂນ້ດດົນຕຣີລາວເດີມທີ່ລະບຸໄວ້, ຖ້າໝັ່ນຝຶກຝົນບໍ່ນານກໍ່ຈະເປັນຜູ້ຊຳນານໃນການເປົ່າແຄນ ເພື່ອກ່ອມຕົນເອງເວລາມ່ວນຊື່ນຫຼືໂສກເສົ້າ, ເປົ່າເພື່ອການສັງສັນຕາມຮີດຄອງປະເພນີຂອງຄົນລາວເຮົາ "ຄົນລາວເປັນຄົນມັກມ່ວນ", ຖ້າຜູ້ໃດສົນໃຈນຳໄປປະພຶດປະຕິບັດຕາມຄຳແນະນຳເລັກ ໆ ນ້ອຍ ໆ ກໍ່ຈະເປັນປະໂຫຍດສູງສຸດໃຫ້ແກ່ການດຳລົງຊີວິດປະຈຳວັນຂອງຕົນແລະແກ່ສັງຄົມອີກດ້ວຍ. "ຊ່ວຍກັນສົ່ງເສີມສຽງແຄນລາວໃຫ້ຢູ່ຄູ່ກັບສັງຄົມລາວ".

ດັ່ງນັ້ນ ຂ້າພະເຈົ້າຂໍສະແດງຄວາມຍ້ອງຍໍ ສັນລະເສີນ ແລະພູມໃຈຕໍ່ທ່ານ ແຈ້ງ ໄຊຍະວົງ ລັດຖະມົນຕີຊ່ວຍວ່າການ ປະຈຳສຳນັກງານນາຍົກລັດຖະມົນຕຣີ, ປະທານອົງການທ່ອງທ່ຽວແຫ່ງຊາດ ໄດ້ມີນ້ຳຈິດນ້ຳໃຈເປັນຫ່ວງຕໍ່ອະນາຄົດຂອງການນຳໃຊ້ແຄນ ໃນຊີວິດທົ່ວສັງຄົມລາວ, ໄດ້ຈັດຕັ້ງສຳມະນາວ່າດ້ວຍແຄນລາວ ເພື່ອກະກຽມໃຫ້ແກ່ການຈັດງານມະຫະກຳຂັບລຳພື້ນເມືອງປະສານສຽງແຄນລາວ ເພື່ອສົ່ງເສີມການທ່ອງທ່ຽວລາວ ໃນຫົວຂໍ້ "ຢ່າປະປ່ອຍໃຫ້ໄພພິບັດຢາບ້າ ຂ້າອະນາຄົດຂອງຊາດ", ໄດ້ຈັດຂຶ້ນເມື່ອວັນທີ 10/09/2001 ທີ່ສວນວັດທະນະທຳບັນດາເຜົ່າ, ໂດຍມີບັນດາທ່ານອາຈານ, ຜູ້ຊ່ຽວຊານ, ນັກວິຊາການ, ນັກສິລະປິນ, ຜູ້ອະວຸໂສ ແລະໄວໜຸ່ມໝໍແຄນ, ໝໍລຳ ເຂົ້າຮ່ວມຢ່າງຫລວງຫລາຍ.

ຂ້າພະເຈົ້າ ຜູ້ໜຶ່ງໄດ້ຖືກເຊີນເຂົ້າຮ່ວມໃນນາມເປັນຜູ້ປາຖະກະຖາກ່ຽວກັບ ແຄນລາວ ແລະນຳທິມງານຂຶ້ນສາທິດໃນການເປົ່າແຄນດ້ວຍລາຍຕ່າງ ໆ ໃນທຳນອງພື້ນເມືອງ ແລະການລຳປະກອບສຽງແຄນ, ຂ້າພະເຈົ້າເອງ ກໍ່ໄດ້ມີໂອກາດຂຶ້ນສະແດງຝີມືສະໝັກຫລິ້ນນຳໝູ່ຄືກັນ; ແຮງບັນດານໃຈໃຫ້ຂຽນປຶ້ມຫົວນີ້ ຍ້ອນວ່າ ທ່ານຜູ້ໃຫຍ່ເຈາະຈົງມາໂດຍກົງ ໃຫ້ຂຶ້ນອະທິບາຍແລະສາທິດຕົວຈິງ ແລະຍ້ອນຄວາມມັກດັ່ງຊີວິດຈິດໃຈຕໍ່ແຄນ ຈຶ່ງໄດ້ຕັ້ງໃຈຄົ້ນຄວ້າມາເປັນເວລາຍາວນານພໍສົມຄວນ. ຕັ້ງແຕ່ ປີ 1995 ໄດ້ເລີ່ມສົ່ງເສີມສິລະປິນ

ສະໝັກຫລິ້ນ ໃນກຸ່ມຊາວໜຸ່ມ, ເຍົາວະຊົນ, ພໍ່ແມ່ປະຊາຊົນໃນທົ່ວປະເທດ ໃຫ້ທັນມານຳໃຊ້ແຄນເປັນເຄື່ອງເສບປະຈຳຕໍ່ການຂັບການລຳຕ່າງ ໆ ໂດຍແມ່ນ ຂ້າພະເຈົ້າ ພ້ອມດ້ວຍຄອບຄົວ ທ. ລັງສີ ໄຊວິສິດ ໄດ້ຕອບສະໜອງແຈກຢາຍແຄນທີ່ໄດ້ມາດຕະຖານໃນການໃຊ້ງານໃຫ້ບຸກຄົນ ແລະກຸ່ມດັ່ງກ່າວ ລວມທັງໝົດ 1,500 ດວງ.

ແຄນເປັນເພື່ອນຂອງຂ້າພະເຈົ້າ ເວລາທີ່ຂ້າພະເຈົ້າມີຄວາມງຽບເຫງົາ ຫຼືອິດເມື່ອຍຈາກການທຳງານ, ການຄົ້ນຄວ້າ, ເຖິງແມ່ນວ່າຈະເດີກດື່ນ ຂ້າພະເຈົ້າກໍ່ຍັງຈັບມັນຂຶ້ນມາເປົ່າພໍແກ້ເຫງົາ, ສຽງແຄນຈະເຮັດໃຫ້ຂ້າພະເຈົ້າລືມຄວາມອິດເມື່ອຍທີ່ມີມາຕະຫລອດທັງວັນ, ໄດ້ຟັງສຽງທີ່ຕົນເອງເປົ່າແລ້ວ (ບໍ່ມ່ວນກໍ່ຕາມ) ແຕ່ເປັນສຽງແຄນເທົ່ານັ້ນກໍ່ຊຸ່ມຊື່ນພໍໃຈ.

ອີກດ້ານໜຶ່ງ ກໍ່ຢາກຈະຝາກໄວ້ເປັນຂອງຂວັນແດ່ລູກ ໆ ໃຫ້ໄດ້ຈັບມາອ່ານສິ່ງທີ່ແມ່ມັກແມ່ແພງ, ວ່າແມ່ໄດ້ຄົ້ນຄວ້າ ຊຽນຫຍັງແດ່ທີ່ເປັນປະໂຫຍດໃຫ້ແກ່ຊາດບ້ານເມືອງ.

ສຸດທ້າຍ ຂ້າພະເຈົ້າ ພ້ອມດ້ວຍຄະນະໄດ້ຈັດທຳໜັງສືສະບັບນີ້ອອກ ເພື່ອຜົນປະໂຫຍດລວມຂອງປະຊາຊົນລາວ, ຈະໄດ້ຮູ້ຈັກວ່າແຄນມີຄວາມຜູກພັນກັບຊີວິດຂອງຄົນລາວຄືແນວໃດ, ຂໍກ່າວຄຳຍິນດີຮັບເອົາຂໍ້ຕຳນິຕິຊົມ ແລະຂໍ້ຄິດເຫັນຂອງທ່ານຜູ້ອ່ານ ເພື່ອມາປັບປຸງ, ດັດແປງ, ແກ້ໄຂຜົນງານອັນນ້ອຍນີ້ ດ້ວຍຄວາມພາກພູມໃຈ ແລະຮູ້ບຸນຄຸນເປັນຢ່າງຍິ່ງ ເພື່ອຈະໄດ້ນຳໄປແກ້ໄຂໃນການພິມຄັ້ງຕໍ່ໄປ.

ວຽງຈັນ, ວັນທີ 04 ເດືອນກັນຍາ 2001

ກິ່ງເດືອນ ເນດຕະວົງ

ອຳນວຍການຫໍສະໝຸດແຫ່ງຊາດ

ຫົວໜ້າໂຄງການເກັບກຳດົນຕຣີພື້ນເມືອງລາວ

## Editor's preface

Khen playing is without doubt one of the essential parts of Lao musical traditions. Many people identify the sound of the khen with their native cultural expressions.
In the Archives of Traditional Music of Laos we collected 602 sound and video documents of khen playing and khen making. We learned that people living in Laos use different kinds of khen with different intentions and a great range of highly finished repertoires. Therefore, the whole phenomenon of khen playing in Laos has many images.
On the other hand, to the young generation, especially in urban centers, which didn't have any chance to come in contact with traditional musical practice, the khen sounds undifferentiated as an antiquated musical instrument and is anticipated as a sign of cultural backwardness.
The first step to open their mind is to help them to understand the multifaceted culture of khen playing and the art of khen making in their own language. Using modern scientific methods, now it is possible to make traditional musical culture accessible to many people with different backgrounds.
So, modernity and tradition do not except each other. They are both parts of our present life. The ATML-team with Kongdeuane Nettavong tried in the following study to overcome this bias in a very successful way.

Vientiane, June 2002

Gisa Jähnichen

Khen = Khaen = Khene

## ຄຳນຳບັນນາທິການ

ໂດຍປັດສະຈາກ ຄວາມສົງໃສ, ການເປົ່າແຄນ ຫຼື ການດ່ຽວແຄນ ແມ່ນໜຶ່ງໃນບັນດາ ສຽງດົນຕຣີ ຕົ້ນຕໍຂອງດົນຕຣີພື້ນເມືອງລາວ ຫລາຍຄົນໄດ້ສະແດງເອກະລັກສຽງຂອງແຄນ ດ້ວຍການສະແດງອອກ ທາງດ້ານວັດທະນະທຳ ຕົ້ນກຳເນີດທ້ອງຖິ່ນຂອງຕົນ.

ໃນຂໍ້ມູນ ກ່ຽວກັບດົນຕຣີພື້ນເມືອງລາວ ທີ່ພວກເຮົາໄດ້ຮັບໂຮມແລ້ວນັ້ນມີ 602 ບົດຂັບລຳ ແລະດ່ຽວແຄນ ພ້ອມທັງໄດ້ສ້າງເອກະສານບັນທຶກພາບ (ວີ ດີ ໂອ) ກ່ຽວກັບ ການເປົ່າແຄນ ແລະການເຮັດແຄນ.

ຍ້ອນການບັນທຶກຂໍ້ມູນດັ່ງກ່າວ ພວກເຮົາໄດ້ຮຽນຮູ້ວ່າ ປະຊາຊົນທີ່ຕັ້ງພູມລຳເນົາ ຢູ່ປະເທດລາວ ໃຊ້ແຄນປະເພດຕ່າງ ໆ ດ້ວຍຄວາມມຸ່ງໝາຍ ທີ່ແຕກຕ່າງກັນ ແລະກໍມີສີມື ການຫລິ້ນຢູ່ໃນລະດັບທຽບຖານທີ່ເຊື່ອຖືໄດ້.

ເພາະສະນັ້ນ ປະກົດການທັງໝົດ ຂອງການເປົ່າແຄນໃນລາວ ຈຶ່ງມີຫລາຍຮູບແບບ ອີກດ້ານໜຶ່ງ ຕໍ່ຄົນຮຸ້ນໜຸ່ມ, ໂດຍສະເພາະຢູ່ໃນຕົວເມືອງ ເຊິ່ງພວກເຂົາບໍ່ມີໂອກາດທາງໃດ ທີ່ຈະເຂົ້າສຳພັດເຖິງການຫລິ້ນດົນຕຣີພື້ນເມືອງ, ສຽງແຄນ ກໍບໍ່ແຕກຕ່າງຫຍັງກັບດົນຕຣີ ທີ່ມີ ເອກະລັກຈຳເພາະ ທີ່ບົ່ງບອກເຖິງພື້ນຖານ ວັດທະນະທຳຍ້ອນຫລັງ.

ໃນຂັ້ນຕອນເບື້ອງຕົ້ນ ເພື່ອປູກຝັງຈິດສຳນຶກຂອງພວກເຂົາ ແມ່ນຊ່ວຍພວກເຂົາ ໃຫ້ເຂົ້າໃຈເຖິງວັດທະນະທຳ ຫລາກຫລາຍລັກສະນະ ຂອງການເປົ່າແຄນ ແລະ ສິລະປະ ໃນການເຮັດແຄນດ້ວຍພາສາແມ່ຂອງຕົນ.

ການນຳໃຊ້ ວິທີວິທະຍາສາດທັນສະໄໝ ປັດຈຸບັນ ມີຄວາມສາມາດ ທີ່ຈະເຮັດໃຫ້ ວັດທະນະທຳ ດົນຕຣີພື້ນເມືອງ ເຂົ້າເຖິງປວງຊົນທັງຫລາຍໄດ້ ໂດຍຮູບການ ການສຶກສາຕ່າງ ໆ ດັ່ງນັ້ນ ສະໄໝນິຍົມ ແລະ ຈາຣີດນິຍົມ ບໍ່ຈຳແນກຊຶ່ງກັນແລະກັນ, ທັງສອງແມ່ນຊີວິດ ແລະ ຈິດໃຈຂອງພວກເຮົາ.

ທີມງານຂອງໂຄງການ ເກັບກຳຂໍ້ມູນດົນຕຣີພື້ນເມືອງລາວຮ່ວມກັບ ທ່ານນາງ ກິ່ງເດືອນ ເນດຕະວົງ ໄດ້ພະຍາຍາມສຶກສາ, ຄົ້ນຄວ້າເລື່ອງດັ່ງກ່າວ ດ້ວຍວິທີການທີ່ປະສົບ ຜົນສຳເລັດ ຢ່າງໜ້າພູມໃຈ.

ວຽງຈັນ, ມິຖຸນາ 2002

**ດຣ. ກິຊາ ແຢະມີເຈນ**

# ສາລະບັນ

ໜ້າ

ຄຳນຳ

ຄຳນຳບັນນາທິການ

ສາລະບັນ

ພາກທີ 1 ການຄົ້ນຄວ້າເບື້ອງຕົ້ນກ່ຽວກັບ "*ແຄນລາວ*" .................................. 1

ຈຳເປັນຫຼືບໍ່ທີ່ຕ້ອງມີການຄົ້ນຄວ້າທາງດ້ານວັດທະນະທຳ ? .......................... 1

ເປັນຫຍັງຈຶ່ງຄົ້ນຄວ້າກ່ຽວກັບ "ແຄນລາວ" ? .......................................... 3

ຈຸດປະສົງຂອງການຄົ້ນຄວ້າ "ແຄນລາວ" .................................................. 3

ຕົ້ນກຳເນີດຂອງ "ແຄນລາວ" (ປະຫວັດ, ລັກສະນະ, ຮູບຮ່າງ) ...................... 4

ປະຫວັດແຄນລາວ ........................................................................ 4

ເຄື່ອງເສບຊະນິດນີ້ ເປັນຫຍັງຈຶ່ງເອີ້ນວ່າແຄນ ? ................................ 4

ແຄນນັ້ນມີມາແຕ່ເມື່ອໃດ ? ....................................................... 11

ລັກສະນະຂອງແຄນ ....................................................................... 15

ສ່ວນປະກອບຂອງແຄນ 1 ດວງ ........................................................ 16

ແຄນ 6 ຮູບຮ່າງແລະຕຳແໜ່ງ, ຊື່ແຕ່ລະລູກຂຽນເປັນໂນດສາກົນ
ແລະຕົວເລກ.............................................................................. 17

ແຄນ 7 ຮູບຮ່າງແລະຕຳແໜ່ງ, ຊື່ແຕ່ລະລູກຂຽນເປັນໂນດສາກົນ
ແລະຕົວໜັງສື........................................................................... 18

ແຄນ 8, ແຄນ 9 .......................................................................... 19

ໂຄງຮ່າງສຽງແຄນ ....................................................................... 20

ການເຮັດແຄນ ............................................................................. 22

ເຄື່ອງມືໃນການເຮັດແຄນ ............................................................... 23

ຂັ້ນຕອນຕ່າງ ໆ ໃນການເຮັດແຄນ ..................................................... 26

ການກຽມໄມ້ລູກແຄນ ................................................................... 26

ການກຽບລູກແຄນ ........................................................................ 27

ວິທີລົບລູກແຄນ .......................................................................... 28

ລີ້ນແຄນ .................................................................................... 28

ການເອົາສຽງແຄນ ........................................................................ 30

ຂັ້ນຕອນລຽນລູກແຄນ .................................................................. 30

ວິທີການເຮັດເຕົ້າແຄນ ........................................................................ 31
ໜ້າທີ່ຂອງແຄນ (ການນຳໃຊ້ແຄນ) ........................................................ 32
ການຂັບລຳຂອງລາວ ແລະເຜົ່າຕ່າງ ໆ ໃນລາວທີ່ໃຊ້ແຄນເປົ່າຄູ່ ................ 33
ລາຍແຄນພື້ນຖານ ................................................................................ 34
ຄຳອະທິບາຍກ່ຽວກັບລາຍແຄນ .............................................................. 34
ການໃຊ້ແຄນເປົ່າຄູ່ກັບສຽງລຳ ສຽງຂັບໃດແດ່ ...................................... 36
ແຄນແລະປະເພນີບູຮານ ແຄນຕິດພັນກັບຊີວິດສັງຄົມລາວ
ອໍ້ແຄນສະໄໝບູຮານ-ປັດຈຸບັນ ................................................................. 37
ການຮຽນເປົ່າແຄນແບບເວດມົນ, ໃຊ້ດ້ວຍຄາຖາ ເພິ່ນເອີ້ນວ່າ ເປົ່າດ້ວຍອໍ້ .... 39
ພື້ນຖານການຂະລຳ ............................................................................... 39
ອັນຕະລາຍຂອງຄົນເປົ່າແຄນດ້ວຍອໍ້ ........................................................ 40
ວິທີອະນຸລັກແຄນ ແລະການປົກປັກຮັກສາ .................................................. 41

ພາກທີ 2 ວິທີເປົ່າແຄນດ້ວຍຕົນເອງ .......................................................... 43
ອະທິບາຍວິທີເປົ່າແຄນ .......................................................................... 43
ວິທີຈັບດວງແຄນ .................................................................................. 44
ວິທີເປົ່າ (ລົມ) ..................................................................................... 44
ການໃຊ້ນິ້ວຄວບແລະໂມ້ຄວບ .................................................................. 45
ຂໍ້ແນະນຳ ............................................................................................ 45
ບົດເພັງແລະບົດລາຍຕ່າງ ໆ ..................................................................... 46
ມາເປົ່າແຄນກັນເຖາະ ............................................................................. 73

ພາກສະຫລຸບມ້ວນທ້າຍຂອງການຄົ້ນຄວ້າແຄນລາວ ........................................ 96

ບັນນານຸກົມ ............................................................................................. 98

ປະຫວັດຜູ້ຂຽນ

# ແຄນ ແລະ ສຽງແຄນ

## ພາກທີ 1 : ການຄົ້ນຄວ້າເບື້ອງຕົ້ນກ່ຽວກັບ "ແຄນລາວ"

1. ຈໍາເປັນຫຼືບໍ່ທີ່ຕ້ອງມີການຄົ້ນຄວ້າທາງດ້ານວັດທະນະທໍາ?

ການພັດທະນາເສດຖະກິດ ແລະ ການໃຊ້ວິທະຍາສາດເທັກໂນໂລຢີ ໃນຫລາຍທົດສະວັດທີ່ຜ່ານມາ ໄດ້ເນັ້ນໜັກການພັດທະນາ ເສດຖະກິດຂອງປະເທດ ພື້ນຖານກະສິກໍາຈົນມາເປັນກະສິກໍາ - ອຸດສາຫະກໍາ ນັບວ່າປະສົບຜົນສໍາເລັດນໍາໜ້າ ທີ່ເຮັດໃຫ້ເສດຖະກິດຂອງປະເທດກ້າວໜ້າກໍ່ໃຫ້ເກີດການປ່ຽນແປງທາງດ້ານວັດຖຸ ແລະ ມີຜົນຕໍ່ເນື່ອງໃຫ້ເກີດການປ່ຽນແປງທາງສັງຄົມ ແລະຈິດໃຈຢ່າງຫລວງຫລາຍດ້ວຍ. ກ່າວຄືທາງດ້ານວັດຖຸໄດ້ມີການນໍາວິທະຍາການ ແລະເທັກໂນໂລຢີສະໄໝໃໝ່ມາໃຊ້ໃນການຜະລິດແລະການດໍາລົງຊີວິດຫລາຍຂຶ້ນ, ທາງດ້ານ ສັງຄົມເກີດການປ່ຽນແປງຢ່າງສັບສົນໃນເລື່ອງຂອງມະໂນທັດ ແລະ ຄ່ານິຍົມ ມີຄວາມຂັດແຍ້ງ ລະຫວ່າງບົດບາດໜ້າທີ່ຂອງສະຖາບັນຕ່າງ ໆ ທາງສັງຄົມຫລາຍຂຶ້ນ ສິ່ງຜົນກະທົບ ຕໍ່ລະບົບໂຄງສ້າງ ແລະແບບປະເພນີຮີດຄອງເດີມຂອງສັງຄົມລາວໄດ້ປ່ຽນໄປດ້ວຍ.

ນອກຈາກນີ້ ການຫລັ່ງໄຫລຂອງວັດທະນະທໍາຕ່າງຊາດ ໄດ້ເຂົ້າມາມີອິດທິພົນຕໍ່ຈິດໃຈ ແລະ ພຶດຕິກໍາຂອງຄົນລາວ ໂດຍສະເພາະເຍົາວະຊົນ, ຊາວໜຸ່ມຢ່າງໄວວາ ແລະ ບໍ່ຢຸດຢັ້ງ ຊຶ່ງເປັນບັນຫາລະດັບໃຫຍ່ ທີ່ຕ້ອງຮີບຮ້ອນຫາທາງແກ້ໄຂເພື່ອປັບຕົວ ແລະ ການດໍາລົງຊີວິດຢູ່ຢ່າງມີສຸຂະພາບ ໂດຍສະເພາະຢ່າງຍິ່ງ ຄວາມເຂົ້າໃຈໃນດ້ານວັດທະນະທໍາ ຊຶ່ງເປັນພາບສະທ້ອນໃຫ້ເຫັນເຖິງສະພາບການດໍາເນີນຊີວິດ - ເສດຖະກິດ ສັງຄົມຂອງຊາດ.

ຈາກບັນຫາດັ່ງກ່າວ ການຄົ້ນຄວ້າ, ວິໄຈວັດທະນະທໍາຈຶ່ງມີຄວາມຈໍາເປັນຢ່າງຍິ່ງ ເພາະການວິໄຈທາງວັດທະນະທໍາ ຈະເປັນເຄື່ອງມືທີ່ຊ່ວຍຄົ້ນຫາຄໍາຕອບຢ່າງເປັນລະບົບ ແລະ ມີເຫດຜົນ ແຕ່ສິ່ງສໍາຄັນທີ່ເປັນຫົວໃຈຂອງການຄົ້ນຄວ້າ ກໍ່ຄື ນັກຄົ້ນຄວ້າ ກ່າວໂດຍລວມ ນັກຄົ້ນຄວ້າດ້ານວັດທະນະທໍາ ຕ້ອງມີມິຕິທາງວັດທະນະທໍາ, ຕ້ອງເຂົ້າໃຈການປ່ຽນແປງ ຕາມກະແສໂລກາພິວັດ, ມີກົນໄກວິທີ ສະແຫວງຫາຂໍ້ມູນ ພື້ນຖານ ເພື່ອມາຢັ້ງຢືນຢ່າງຮອບຄອບ ແລະ ຕົງກັບປະເດັນ ເພື່ອອະທິບາຍເລື່ອງທີ່ຕົນຄົ້ນພົບ ຫຼື ອະທິບາຍຂໍ້ບັນຫາ ຫຼື ອົງປະກອບ ຄວາມຮູ້ໄດ້ເປັນຢ່າງດີ.

ເປັນທີ່ຊາບກັນໂດຍທົ່ວໄປແລ້ວວ່າ ປະເທດລາວ ດິນແດນລ້ານຊ້າງໃນສະໄໝກ່ອນເປັນບໍລິເວນແຫລ່ງອາຣິຍະທໍາທີ່ເກົ່າແກ່ແຫ່ງໜຶ່ງ ໃນພາກພື້ນອາຊີ ຫຼື ໃນໂລກ, ແຕ່ໃນສະພາບປັດຈຸບັນນັກຄົ້ນຄວ້າທາງດ້ານວັດທະນະທໍາ ຂອງພູມີພາກນີ້ນັບໄດ້ວ່າມີໜ້ອຍ, ນັບນິ້ວມືກໍ່ຍັງໄດ້

ຖ້າປຽບທຽບກັບນັກຄົ້ນຄວ້າຂະແໜງການອື່ນ ໆ. ສາຍເຫດອາດຈະເກີດຈາກການຂາດທຶນຮອນໃນການຄົ້ນຄວ້າ, ຂາດເອກະສານຢັ້ງຢືນ ທີ່ບັນທຶກໄວ້ໃນສະໄໝຕົ້ນ (ບໍ່ມີເວລາໃຫ້ແກ່ການຄົ້ນຄວ້າຢ່າງພຽງພໍ). ສ່ວນຫລາຍຈະເຫັນໄດ້ຈາກການຄົ້ນຄວ້າ ຂອງຄົນຕ່າງປະເທດ ໃນສະໄໝເປັນທິວເມືອງຂຶ້ນ ແລະ ໃນໄລຍະຫລັງ ໆ (ທົດສະວັດຜ່ານມາ) ນັກວິໄຈຕ່າງດ້າວທີ່ສົນໃຈກ່ຽວກັບວັດທະນະທຳ ຂອງລາວ, ບົດຄົ້ນຄວ້າກໍ່ຂຽນເປັນພາສາຕ່າງປະເທດ ແລະ ຫາແຫລ່ງທີ່ເກັບຮັກສາບໍ່ມີ, ຫຼືມີແລ້ວກໍ່ສູນເສຍໄປຕາມການເວລາ; ເມື່ອມີຄວາມຕ້ອງການຢາກຄົ້ນຫາຂໍ້ມູນກ່ຽວກັບສິ່ງໃດ ສິ່ງໜຶ່ງກໍ່ຄົ້ນບໍ່ເຫັນ, ນັບວ່າເປັນສາຍເຫດໜຶ່ງທີ່ສ້າງຄວາມຫຍຸ້ງຍາກໃຫ້ແກ່ການຄົ້ນຄວ້າຂອງຄົນຮຸ່ນຫລັງ.

ດັ່ງຄຳກ່າວຂອງທ່ານມື້ລາງປະທານປະເທດໄກສອນ ພົມວິຫານ ໃນການໂອ້ລົມ ນັກຮົບວັດທະນະທຳຄັ້ງແລ້ວຄັ້ງເລົ່າວ່າ "ເສຍວັດທະນະທຳກໍ່ຄືເສຍຊາດ" ວັດທະນະທຳເປັນຂະແໜງໜຶ່ງທີ່ມີຄວາມໝາຍ, ຄວາມສຳຄັນຕໍ່ຊີວິດຈິດໃຈຂອງຊາວລາວເຮົາ, ເຮົາຄວນຮັກສາທຸກສິ່ງທຸກຢ່າງທີ່ມີມາແຕ່ບູຮານນະການຊຶ່ງເປັນມໍລະດົກທາງດ້ານວັດທະນະທຳໃຫ້ຍືນຍົງ ຄົງຕົວຢູ່ຄູ່ບ້ານຄູ່ເມືອງຕະຫລອດການ.

ດົນຕຣີພື້ນເມືອງລາວ (Traditional Music in Laos) ກໍ່ແມ່ນສ່ວນໜຶ່ງຂອງ ວັດທະນະທຳ (ວັດທະນະທຳດົນຕຣີ) ຫໍສະໝຸດແຫ່ງຊາດເປັນແຫລ່ງສະສົມຂໍ້ມູນດັ້ງເດີມ ທີ່ກ່ຽວພັນກັບມໍລະດົກດ້ານວັດທະນະທຳໄດ້ສ່ວນໃດສ່ວນໜຶ່ງເທົ່ານັ້ນ,ຊຶ່ງໃນປີ 1999 ໄດ້ລິເລີ່ມ ໂຄງການເກັບກຳຂໍ້ມູນດົນຕຣີພື້ນເມືອງລາວຊຶ່ງດຳເນີນມາຮອດປີ 2001 ກໍ່ສາມາດຮັບໂຮມໄດ້ ຂໍ້ມູນອັນລ້ຳຄ່າກ່ຽວກັບດົນຕຣີ, ເຄື່ອງດົນຕຣີຂອງຊົນຊາດລາວເຮົາໄດ້ປະດິດຄິດແຕ່ງ ແລະ ປະຕິບັດມາແຕ່ຕົ້ນກຳເນີດຈົນຕະຫລອດຮອດປັດຈຸບັນ.

ຈາກການລົງເກັບກຳຂໍ້ມູນພື້ນຖານແຕ່ເໜືອຮອດໃຕ້, ສາມາດສະສົມໄດ້ມໍລະດົກອັນລ້ຳເລີດຊຶ່ງຫາໃສປຽບບໍ່ໄດ້ອີກແລ້ວ, ຄວາມເປັນເອກະລັກຂອງຊົນຊາດລາວໂດຍຜ່ານ ຮູບແບບ "ດົນຕຣີ ແລະເຄື່ອງດົນຕຣີພື້ນເມືອງລາວ".

ຈາກການເສບ ແລະ ຂັບລຳຂອງບັນດາເຜົ່າໃນທົ່ວແຄວ້ນແດນຈຳປາ, ຈະເຮັດໃຫ້ຜູ້ຟັງ ແລະ ຜູ້ຊົມ ໄດ້ສຳຜັດກັບຮີດຄອງປະເພນີ ແລະ ວິຖີການດຳລົງຊີວິດຂອງຊາວລາວຢ່າງລະອຽດ ແລະ ຈະແຈ້ງທີ່ສຸດ. ເປັນອັນຢັ້ງຢືນເຖິງມໍລະດົກຂອງປູ່ຍ່າຕາຍາຍ ຄົນຮຸ່ນກ່ອນ (ເຊື້ອຊາດລາວ) ຊຶ່ງເລີ່ມແຕ່ເກີດມີຊາດລາວ, ຄົນລາວມາຮອດຮຸ່ນປັດຈຸບັນ.

ດົນຕຣີພື້ນເມືອງລາວທີ່ຫໍສະໝຸດແຫ່ງຊາດສາມາດເກັບກຳມາໄດ້ ໃນເບື້ອງຕົ້ນກໍ່ມີຫລາກຫລາຍທຳນອງ, ການເສບ, ການຂັບລຳ ສຸດທີ່ຈະພັນລະນາໄດ້, ເຄື່ອງດົນຕຣີຫລັກ ທີ່ເຄີຍນຳເຂົ້າໃນການເສບ, ໃນທຳນອງແຕ່ງກໍ່ມີຫລາຍຊະນິດ ຊຶ່ງເລີ່ມແຕ່ ແຄນ, ລະນາດ, ຊໍ່ອູ້, ຊໍ່,

ກະຈັບປີ່, ກອງ, ຄ້ອງວົງ, ແຊ່ງ, ສິ່ງ, ໂຫວດ, ສະໄນ. ແຕ່ລະຊະນິດກໍ່ຍັງຈັດແບ່ງເປັນຫລາຍປະເພດອີກ ເຊັ່ນ: ແຄນ ກໍ່ມີຫລາຍປະເພດ, ລະນາດ, ຊໍ ກໍ່ເຊັ່ນດຽວກັນ.

## 2. <u>ເປັນຫຍັງຈຶ່ງຄົ້ນຄວ້າກ່ຽວກັບ "ແຄນລາວ"?</u>

ແຄນລາວ ເປັນເຄື່ອງດົນຕຣີຫລັກ ແລະ ພື້ນເຫງົ້າຂອງລາວເຮົາ, ນັບວ່າເປັນມິ່ງຂວັນຊີວິດຂອງການດຳລົງຊີວິດຂອງຄົນລາວແຕ່ສະໄໝເກີດມີຊາດລາວຈົນຮອດປັດຈຸບັນ, ແຕ່ວັດຖຸດັ່ງກ່າວກຳລັງຈະສູນຫາຍໄປກັບຄວາມຫລາກຫລາຍຂອງເຄື່ອງດົນຕຣີສາກົນເຂົ້າມາແທນ, ຄົນຮຸ່ນປັດຈຸບັນກຳລັງຫັນຫລັງໃຫ້ແຄນລາວນັບມື້ນັບຫລາຍຂຶ້ນ, ຈະສັງເກດເຫັນໄດ້ວ່າວົງດົນຕຣີໃຫຍ່ ໆ, ວົງດົນຕຣີສະໝັກຫຼິ້ນ ແລະ ການຄົບງັນຕ່າງ ໆ ຕາມບ້ານຕາມຊ່ອງ, ຢູ່ສອກຫລີກຊົນນະບົດກໍ່ດີ, ໃນເມືອງກໍ່ດີ ຈະຫັນມາໃຊ້ອໍແກນ, ເຄື່ອງເສບເອເລັກໂຕຼນ ແທນສຽງແຄນລາວ. ຊ້ຳບໍ່ໜຳ, ບາງຄົນກໍ່ຍັງກ້າເວົ້າໄດ້ເຕັມປາກວ່າ "ຟັງສຽງແຄນມັນເຊີຍ, ບ້ານນອກ, ບໍ່ທັນສະໄໝ" (ເຊີຍ = ບໍ່ທັນສະໄໝ / ເປັນຄຳສັບທີ່ນັກເວົ້າກັນ), ພາກັນແລ່ນຕາມຫລັງສຽງແຄນທຽມກັນໝົດ, ຍົກຄ່ານິຍົມຂອງທຽມໃຫ້ລື່ນຂອງຈິງ.

ກົງກັນຂ້າມ ດຽວນີ້ແມ່ນຄົນຕ່າງປະເທດຫັນມາສົນໃຈແຄນລາວ "ເຄື່ອງເສບມິ່ງຂວັນຂອງຊາດລາວ" ເດີນທາງຂ້າມນ້ຳຂ້າມທະເລມາເລາະຊອກຫາຮຽນເປົ່າແຄນຢູ່ດິນລາວ; ບາດຊາວໜຸ່ມລາວເຈົ້າຂອງແຄນແທ້ ໆ ພາກັນຫັນຫລັງໃຫ້ ດັ່ງຄຳສຸພາສິດບູຮານທີ່ວ່າ:

"ເພັດເມັດງາມຢູ່ໃນມືປ່ອຍໃຫ້ເສົ້າ",

"ຂອງເກົ່າບໍ່ເລົ່າມັນກໍ່ຍັງລືມ".

## 3. <u>ຈຸດປະສົງຂອງການຄົ້ນຄວ້າ "ແຄນລາວ"</u>

- ຍ້ອນມັກສຽງແຄນລາວ;
- ແຄນເປັນເຄື່ອງດົນຕຣີທີ່ມີສະເໜສວຍງາມ, ມີລັກສະນະພິເສດໃນບັນດາເຄື່ອງດົນຕຣີປະເພດອື່ນ ໆ ແລະ ເປັນເອກະລັກຂອງລາວ ບໍ່ວ່າຈະເປັນແຄນຂອງລາວເທີງ, ລາວສູງ, ລາວລຸ່ມ ລ້ວນແຕ່ມີສະເໜງາມຕາ;
- ເພື່ອສົ່ງເສີມໃຫ້ຄົນລາວ, ເຈົ້າຂອງສຽງແຄນເຂົ້າໃຈເຖິງຄຸນຄ່າຂອງແຄນທີ່ ບັນພະບຸຣຸດລາວໄດ້ປະດິດຄິດສ້າງຂຶ້ນມາ ແລະ ນຳໃຊ້ເຂົ້າໃນການເຄື່ອນໄຫວທຸກພິທີກຳ ທາງສາສະໜາກໍ່ຄືໃນຮີດຄອງປະເພນີ, ຄວາມເຊື່ອຖື, ການມ່ວນຊື່ນອື່ນ ໆ, ຄຸນປະໂຫຍດ ຂອງແຄນຕິດພັນກັບວິຖີຊີວິດຂອງຊາວລາວແຕ່ເໜືອເຖິງໃຕ້;

- ເພື່ອອະນຸລັກໄວ້ໃຫ້ເປັນມູນມໍລະດົກສືບທອດທາງດ້ານວັດທະນະທຳດົນຕຣີ;
- ເພື່ອເປັນການສ້າງສຳພັນ ແລະ ລົບລ້າງການຂັດແຍ້ງ ລະຫວ່າງຊົນນະບົດ ແລະ ຕົວເມືອງ, ສົ່ງເສີມໃນການນຳໃຊ້ຄືນໃໝ່ໃຫ້ທົ່ວສັງຄົມລາວ;
- ເພື່ອເປັນການສະເໜີ ແລະ ເຜີຍແພ່ຢ່າງກວ້າງຂວາງໃຫ້ຄົນລາວ, "ເຈົ້າຂອງ ສຽງແຄນລາວ" ແລະ ຊາວໂລກໄດ້ຮັບຮູ້ວ່າ "ແຄນເກີດໃນຖິ່ນຖານກຳເນີດ ຂອງເຊື້ອຊາດລາວ" ຄຳວ່າແຄນ ກັບລາວ ເປັນຂອງຄູ່ກັນ;
- ເພື່ອເປັນການສະເໜີ ແລະ ຢັ້ງຢືນວ່າ ແຄນລາວເປັນເຄື່ອງເສບລະດັບຊາດຂອງລາວ;
- ເພື່ອໃຫ້ທຸກຄົນທີ່ສົນໃຈ ແຄນລາວ ສາມາດຮຽນເປົ່າໄດ້ດ້ວຍຕົນເອງຫຼືຮຽນນຳຄູ.

## 4. ຕົ້ນກຳເນີດຂອງ "ແຄນລາວ" (ປະຫວັດ, ລັກສະນະ, ຮູບຮ່າງ)

### 4.1. ປະຫວັດແຄນລາວ

ເຄື່ອງດົນຕຣີທີ່ຄົນລາວໃຊ້ເຂົ້າໃນການມ່ວນຊື່ນ ຫຼືພິທີກຳທາງສາສໜາ, ຄວາມເຊື່ອຖື ກັນມາແຕ່ບູຮານນະການກໍ່ມີຫລາຍປະເພດດ້ວຍກັນ, ແຕ່ອັນທີ່ເດັ່ນກວ່າໝູ່ແມ່ນ "ແຄນ" ແລະ ມີ ຄວາມສຳຄັນສຳລັບຄົນລາວ; ລີລາການໃຊ້ກໍ່ຄ່ອງຕົວ ແລະ ກົມກືນກັບສຳນຽງພາສາໄດ້ດີກວ່າ ເຄື່ອງເສບດົນຕຣີປະເພດອື່ນ ໆ.

ແຄນ ແມ່ນເຄື່ອງເສບຊະນິດໜຶ່ງໃຊ້ລົມທາງປາກເປົ່າຊ່ວຍ ຈຶ່ງຈະອອກເປັນສຽງ, ເຮັດ ດ້ວຍໄມ້ອໍ້, ໄມ້ເຮັຍປ່ອງຮຽວ ຈັດລຽງເປັນລູກ ໆ ຜ່ານເຕົ້າໄມ້ຊະນິດແຂງ, ໃນລຳລູກແຄນ ຈະຕ້ອງ ໃຊ້ລີ້ນທີ່ບັງຄັບເປັນສຽງຕ່າງ ໆ ກັນ. ລີ້ນນັ້ນຈະເຮັດດ້ວຍທອງແດງປະສົມເງິນຫຼື ທອງແດງສິດ, ແຕ່ລະລີ້ນແຄນຈະປາສະຈາກສຽງ ມີແຕ່ເວລາໃດທີ່ໃຊ້ນິ້ວມືອັດຮູຈຶ່ງຈະເປົ່າ ອອກສຽງໄດ້.

ແຄນເປັນເຄື່ອງເສບດົນຕຣີທີ່ມີສຽງເລິກແລະແຫລມ ໃຊ້ເປົ່າດ່ຽວແລະເປົ່າຄູ່, ມີສຽງມ່ວນ ໜ້າອອນຊອນ ຟັງແລ້ວເພີດເພີນຈະເລີນໃຈ ໃຫ້ຄິດເຖິງບ້ານເກີດເມືອງນອນແລະອະດີດ.

#### 4.1.1. ເຄື່ອງເສບຊະນິດນີ້ ເປັນຫຍັງຈຶ່ງເອີ້ນວ່າແຄນ?

ຄຳວ່າ "ແຄນ" ນັ້ນໃນພາສາລາວມີຄວາມໝາຍຫລາຍຢ່າງ: ຄວາມໝາຍທີໜຶ່ງ ແຄນ ໝາຍເຖິງ ທຸກຍາກ, ຂາດແຄນ, ຄວາມໝາຍທີສອງ ແຄນ ໝາຍເຖິງ ຕົ້ນໄມ້ເນື້ອແຂງຊະນິດໜຶ່ງ ຮຽກວ່າຕົ້ນແຄນ ແລະ "ແຄນ" ຍັງເປັນຄຳເວົ້າຂອງຄົນລາວພາກເໜືອວ່າ: "ແຄນແນ່" ໝາຍວ່າ ໄຄແນ່.

ມີຫລາຍນັກຄົ້ນຄວ້າດ້ານດົນຕຣີພື້ນເມືອງ ໄດ້ຄົ້ນຄວ້າຫາຕົ້ນກຳເນີດ, ຕ່າງກໍ່ຄິດ ແຕກຕ່າງ ກັນ ບໍ່ທັນເປັນເອກະພາບ, ໃນບົດຄວາມກ່ຽວກັບເລື້ອງແຄນລາວ, ເຄື່ອງດົນຕຣີ ປະຈຳຊາດ, ຮວບຮວມໂດຍ ຂັນທອງ ທັມມະວົງ (ອະທິບໍດີກົມສິລະປາກອນ ປີ ຄ.ສ 1968).

ທ່ານຂັນທອງ ໄດ້ກ່າວໄວ້ວ່າ ຕົ້ນກຳເນີດຂອງແຄນລາວ, ເລົ່າໂດຍທ່ານມະຫາຈູມ ຈິນຕາພິດ (ພະນັກງານກົມວັນນະຄະດີ)

ແຄນນີ້ຂອງເລີດລ້ຳ ເກົ່າແກ່ເດີມມາ
ຕັ້ງແຕ່ຄັ້ງສາສະໜາ ພຣະວິປັດສີເຈົ້າ
ວັນໜຶ່ງມີພຣະຣາຊາເຂົ້າ ດົງດອນນອນປ່າ
ໄປທ່ຽວຫາເຊີດເນື້ອ ໃນດ້າວດ່ານໄພ
ກັບທັງອາມາດໄທ້ ພວກໝູ່ມົນຕຣີ
ຈອນລະຣີໄປເຖິງ ເຂດຂວາງເຂົາກວ້າງ
ຝູງໝູ່ກວາງຟານເໝັ້ນ ເຫັນພຣະອົງໂຢງພ່າຍ
ຈົນເວລາທ່ຽງຄ້າຍ ຫາຍຈ້ອຍເຄື່ອງສະເຫວີຍ.
ແມ້ງໜຶ່ງໄປຮອດເກັ້ຍ ຕົນຕາດຜາສູງ
ມີໝູ່ຍູງຍາງດົກ ດູ່ແດງດວງດົ້ວ
ເປັນຂິວນົວເຄືອກ່ຽວ ຊຽວອາຣົມເປັນຣົ່ມ
ລົມພັດມາຮ້າວ ໆ ເຢັນຈ້າວໜ່ວງຄືງ.
ພຣະອົງເລີຍສະນຶ້ງ ງ້ວງເຫງົ້າເຫງົານອນ
ອ່ຣະຊອນລົມໂຣຍ ລ່ວງໂຊຍມາເຕົ້າ
ຝູງໝູ່ເສນາເຫງົ້າ ມົນຕຣີນ້ອຍໃຫຍ່
ພ້ອມອາໃສທີ່ນັ້ນ ໃນຫັ້ນສູ່ຄົນ
ແຕ່ນັ້ນພຣະໜຶ່ງຕົ້ນ ຕົນຜ່ານພາຣາ
ເລີຍນິດທານອນຫລັບ ເຊືອບໄປຄາວນ້ອຍ
ຟັງຍິນສຽງກອຍ ໆ ຮ້ອງ ແກວ ໆ ກໍຣະວິກ
ຈັບຢູ່ເທິງງ່າໄມ້ ໄຣຮ້ອງສິ່ງສຽງ
ພ້ອມດ້ວຍສຽງນົກອ້ຽງ ຮຽງຮ່ອໍຫໍ
ສຽງອໍ ໆ ອິ ໆ ວີແວວແຈວຈີ້
ສຳນະປີສຽງທ້າວ ວາວໂວວາວໂວ່
ມີທັ້ງໂອແລະໂອ້ ໂອອ້ອຍອິ່ນອອຍ
ຟັງແລ້ວເລີຍສະນ້ອຍ ອ້ອຍອິ່ນໃນພຣະໄທ
ພູວະໄນນອນຫລັບ ຕື່ນມາຟັງແຈ້ງ
ຍິນສຽງລົມສະແວງຕ້ອງ ນອງນັນກໍຣະວິກ

ເລີຍກະສັນສວ່າງເສົ້າ ເປົ່າເນື້ອທ່າງແຄນ
ພຣະອິງຄິດແນ່ນແນ້ງ ມັກໄຄ່ໃນສຽງ
ໃນສຳນຽງຂອງນົກ ທີ່ບິນເລງນັ້ນ
ຈຶ່ງໄດ້ທັນຕັດຕ້ານ ຖາມຂຸນຂ້າມະຫາດ
ພ້ອມປະກາດບອກຊີ້ ເຊີນນົ້ງຊ່ວຍຟັງ
ໃຜຈັກຕຶກແຕ່ງຕັ້ງ ທຳສິ່ງເປັນສຽງໄດ້ບໍ?
ໃຫ້ຄືສຳນຽງສຽງນົກ ເປົ່າຟັງກັນໄດ້
ເຮັດໃຫ້ເປັນຂອງໃຊ້ ດົນຕຣີສີເປົ່າ
ເຮົາພຣະອົງຊິໃຫ້ ສິນຈ້າງຄ່າພັນ.
ຍັງມີອາມາດຊັ້ນ ກະວີເອກອາສາ
ຮັບບັນຊາທຳຖວາຍ ດັ່ງໃຈຈິງອ້າງ
ສອງກໍ່ວາງຄຳໝັ້ນ ສັນຍາເດັດຂາດ
ໃນໂອກາດຄັ້ງນັ້ນ ຕາເວັນສ້ວຍອ່ອນລົງ
ພຣະອົງກໍ່ພາໄພ່ໂຄ້ງ ຄືນສູ່ກຸງສີ
ຈອນຣະຣິເຖິງເມືອງ ນັ່ງປອງເປັນເຈົ້າ
ມີສະໜົມນັ່ງເຝົ້າ ຮຽງປາງຂ້າງເສື່ອ
ພຣະອົງກໍ່ຍັງອ່າວເອື້ອ ສຽງນັ້ນຢູ່ບໍ່ເຊົາ
ບັດນີ້ຈັກກ່າວອາມາດເຄົ້າ ຜູ້ຮັບອາສາ
ຫາຕຶກຕອງປັນຍາ ທ່າໃດສິທຳໄດ້
ຄິດຈົນໃຈຫລາຍມື້ ບໍ່ມີຫວນເຫັນຮຸ່ງ
ເລີຍມຸ້ງອອກຈາກຫ້ອງ ເຮືອນຢ້າວທ່າວໄປ
ລາວກໍ່ເຂົ້າປ່າໄມ້ ດົງດ່ານອາຣັນຍາ
ເດີນດຸ່ງຄາຄາວໄກ ເມື່ອແຄນຄາວແຄ້ນ
ແນ້ງໜຶ່ງເຖິງແດນຫ້ວຍ ສວຍລວຍກ້ວຍປ່າ
ມີສາຂາໜໍ່ອໍ້ ຊໍຊ້ອງທິວດານ
ໄດ້ຍິນນ້ຳສະທ້ານ ໂຕນຕາດສຽງດັງ
ຢູ່ໃນວັງ ມີແຕ່ປູປາຫອຍ ລ່ອງລອຍຊົມກ້ອນ
ຍິນສະອອນຝູງກະເບື້ອ ບິນເຝືອແຄມຝັ່ງ
ເຖົ້າກໍ່ນັ່ງຈົ້ກົ້ ລົງທັ້ນເມື່ອຍເຊົາ.
ພາກໜຶ່ງ ລົມລ່ວງເທົ້າ ອໍ້ອ່ອນແຄມຊົມ

ປານຄົນກິນສຸຣາ ທ່າເມົາເຢົາຢ້ອນ
ເລີຍສະອອນໃຈເຖົ້າ ເທົ່າໄປເຊືອບໜຶ່ງ
ໃຈຄະນຶງບໍ່ແລ້ວ ວິທີສ້າງແຕ່ງການ
ແຕ່ນັ້ນ ລົມພັດປ້ານ ອໍ້ອ່ອນປາຍກຸດ
ສຽງມັນດັງວິວຸດ ວູ່-ແວວ-ແອວ-ແອ້
ຜ່ອງກໍ່ ແຈວວາແຈ້ ແວແວວໂວ້ວໍ່
ເປັນເພາະປ່ອງໄມ້ອໍ້ ຍາວສັ້ນບໍ່ຄ່າກັນ.
ອີກປະສິບຄັ້ງນັ້ນ ວັນບ່າຍພໍດີ
ຝູງແມງອີກາເລັ່ນ ເຜັ່ນບິນມາຮ້ອງ
ນົກເຂົາທອງເຂົາຕູ້ ຄູ່ກັນກ້ອງສະນັ່ນ
ຝ່າຍອາມາດຜູ້ນັ້ນ ນອນແລ້ວຕື່ນມາ
ລາວກໍ່ສະສວຍໜ້າ ລຸກນັ່ງຟັງສຽງ
ຟັງສຳນຽງລົມພັດ ເປົ່າຕໍລຳອໍ້
ສຽງຕໍ່ຍາວຕໍ່ສັ້ນ ປົນກັນນ້ອຍໃຫຍ່
ທັງເຣໄຣຕ່າງເຊື້ອ ປະສົມເຂົ້າມ່ວນຫູ
ເຖົ້າເລີຍຄິດຊວາດຮູ້ ວິທີແຕ່ງດົນຕຣີ
ຕາມດັ່ງອິງພູມີ ມອບໝາຍມານັ້ນ
ດຽວໜຶ່ງວັນມິວຄ້ອຍ ບົດທະສູນແສງຕ່ຳ
ລາວຈຶ່ງລາໄຕ່ເຕົ້າ ຄືນເຂົ້າສູ່ນະຄອນ
ເລີຍເລົ່າຫາຍເທດຮ້ອນ ນອນພ່າງພັນຣິຍາ
ຈົນເວລາສູນສາງ ສວ່າງມາຍາມເຊົ້າ
ນົກກາເວົ້າມັນຮ້ອງ ຈອງທອງຂາຍກອກ
ລາວກໍ່ຊອກໄດ້ພ້າ ປະດາເຂົ້າສູ່ໄພ
ຕັດເອົາຕົ້ນໄມ້ອໍ້ ສາມຄູ່ພໍດີ
ທັງເລົ່າຊີແທງເລາະ ຂໍ້ເສຍໝົດກັງງ
ບ່ອນຫວ່າງທາງກາງນັ້ນ ເຈາະລົງເປັນປ່ອງ
ເຈາະຮູແພວສ່ອງແລ້ວ ເລີຍເໜັບລີ້ນຕື່ມແຖມ
ເມື່ອນັ້ນເຖົ້າສ້າງແລ້ວ ກໍ່ລອງເປົ່າຟັງສຽງ
ມີສຳນຽງອໍ່ແອ ວິ່ແວວແວ້
ທັງແລນແຈນລັນແຈ້ ຍາກຄືສຽງກໍ່ຣະວີກ

ຄັນວ່າແມ່ນຜິດ ກໍ່ມີພຽງເລັກນ້ອຍ ພອຍຊິໄດ້ຄ່າແທນ.
ພໍຄິດແລ້ວທີ່ນັ້ນ ຕີນພໍ່ເສນາ
ເລີຍໄວວາເມືອ ຮອດໂຮງພຣະຍາເຈົ້າ
ເອົາດິນຕຣີຖວາຍໃຫ້ ພູວະໄນດັ່ງວ່າ
ທາງມະຫາຣາຊເຈົ້າ ຈຶ່ງຈໍາເຖົ້າເປົ່າ
ເຖົ້າເລີຍນັ່ງຕະແພບຄູ້ ແລ້ວເປົ່າເອົາຖວາຍ
ທຳທ່າໄກວຫົວຫາງ ຢ່າງນໍາເອົາໄວ້ ໆ
ສຽງດິນຕຣີດັ່ງໄດ້ ແກວ ໆ ແກ້ວກ່ອງກໍ
ເອົາບໍ່ນໍສ່ານີ້ ພຣະອົງເຈົ້າວ່າຈັ່ງໃດ?
ພຣະຣາຊາຊິງຕັດ "ໃຊ້ແຄນແດ່"
ເລີຍຂຸນເຈົ້າ ຍັງປຸນແປງເຮັດ ເກີດເປັນປານນີ້
ໃຫ້ທ່ານທໍາດີຂຶ້ນ ທູນຖວາຍຣາຍໃຫມ່
ເຮົາກໍ່ຍັງສິໃຫ້ ສິນຈ້າງຄ່າພັນ
ໃນກາລະຄັ້ງນັ້ນ ຄຸນພໍ່ເສນາ
ກໍ່ຈຶ່ງອໍາລາຄືນ ຄອບເຮືອນເຮວຟ້າວ
ລາວຈຶ່ງພຽນແປງສ້າງ ວາງເປັນຮູບໃຫມ່
ປະດິດໃຫຍ່ຂຶ້ນໜ້າ ຈະແຈ້ງຍິ່ງທະວີ
ເຮັດໄປຖວາຍເທື່ອນີ້ ເຈັດຄູ່ພໍດີ
ອົງພຣະພູມີຕັດ ວ່າແຄນ ໆ ແລ້ວ
ເພາະມັນມີສຽງແກ້ວ ແກວ ໆ ແຈ້ວແມ້ນແມ່
ເຮັດມາຖວາຍອີກແມ້ ໃຫ້ດີແທ້ກວ່າຫລັງ
ຂຸນກໍ່ທໍາອີກຄັ້ງ ເປັນເທື່ອທີສາມ
ມີທັງງາມຈົບດີ ຄົບຂະບວນຄວນຍ້ອງ
ມີສຽງທອງສຽງທ້າວ ວາວແວວແຈ້ວລັນຈັ່ນ
ສຽງທຸ້ມຍູ້ກໍ່ພ່ອງນັ້ນ ທັນຂຶ້ນວື່ນສຽງ
ລູກມັນມີໝົດກັ່ງງ ແປດຄູ່ງາມຂໍາ
ຂຸນເມືອງນໍາເມືອຖວາຍ ທອດພຣະກັນວັນທ້າຍ
ຊົງກະຫາຍຫົວຍ້າມ ເຫັນງາມແຍ້ມພະໂອດ
ໂປດວ່າ "ແຄນແທ້ແລ້ວ" ຄາວນີ້ທ່ານຂຸນ
ຄໍາວ່າ "ແຄນ" ມັນບໍ່ຄາຄໍາເວົ້າ ແຄນໄຄໄກ້ມໍ່

| | |
|---|---|
| ກໍ່ແມ່ນກໍ່ຣະວີກຮ້ອງ | ຂອງແທ້ອີ່ຫຼີ |
| ອີກຢ່າງໜຶ່ງ ຍ້ອນດົນຕຣີປະເພດນີ້ | ພາໃຫ້ສວ່າງຄວາມອຸກ |
| ພາໃຫ້ຫາຍຄວາມທຸກ | ຍາກແຄນແສນແຄ້ນ |
| ຊື່ວ່າແຄນ ໆ ແລ້ວ | ໝົດທັງມວນມີແຕ່ມ່ວນ |
| ເພິ່ນຈຶ່ງມ້ວນໃສ່ຫັ້ນ | ຄຳນັ້ນວ່າ "ແຄນ". |

ສ່ວນນັກຄົ້ນຄວ້າດົນຕຣີພື້ນເມືອງ ທ່ານແຕຣີ ມີແລ ກໍ່ໄດ້ຂຽນບົດກ່ຽວກັບເຄື່ອງດົນຕຣີລາວ ໂດຍສະເພາະ ແຄນ ຂອງເຊື້ອຊາດລາວ, ນັ້ນຜູ້ກ່ຽວບໍ່ໄດ້ຈຳແນກວ່າ ລາວຟາກຝັ່ງ ແມ່ນ້ຳຂອງຊ້າຍ ແລະ ຂວາເລີຍ, ແຕ່ເວລາທີ່ເວົ້າເຖິງດົນຕຣີພື້ນເມືອງລາວ ທ່ານຈະຄົ້ນຄວ້າເຖິງ ໝໍລຳ ແລະ ໝໍແຄນໃນພາກຕາເວັນອອກສ່ຽງເໜືອຂອງໄທ ແລະ ປົນກັບລາວຢູ່ຝັ່ງຊ້າຍພ້ອມ ໆ ກັນ ບໍ່ໄຈ້ແຍກ ອອກຈາກກັນ, ຖືວ່າເປັນດົນຕຣີຂອງລາວ . ເພິ່ນໄດ້ກ່າວເຖິງຕົ້ນປະຫວັດຂອງແຄນລາວນັ້ນມັນສັບ ສົນ ເພາະຄົນລາວກໍ່ຄືກັນກັບຊົນຊາດອື່ນ ໆ ທີ່ອະທິບາຍກົກເຄົ້າດ້ານວັດທະນະທຳຂອງພວກເຂົາ.

ບໍ່ແປກປະຫລາດທີ່ຄົນລາວມີຕຳນານທີ່ເລົ່າຕໍ່ ໆ ກັນມາເຊັ່ນລູກເຊັ່ນຫລານກ່ຽວກັບກົກເຄົ້າ ຂອງແຄນ, ຕຳນານທີ່ເລົ່າສູ່ກັນມານັ້ນຍ່ອມມີການພັ່ງນຈາກເທົ້າ ເຊັ່ນ: ເພິ່ນໄດ້ສຳພາດ ຄົນລາວທີ່ຢູ່ແຖບເມືອງຮ້ອຍເອັດ ຊຶ່ງເປັນຜູ້ເຮັດແຄນອາວຸໂສຄົນໜຶ່ງ, ຕຳນານເລົ່າກັນວ່າ: ເຫີງນານມາແລ້ວ ຍັງມີນາຍພານໂຣ່ເນື້ອຕາມລ່າໂຕຟານຢູ່ຕາມປ່າດົງພົງໄພ ໃນຂະນະນັ້ນ ລາວກໍ່ ໄດ້ຍິນສຽງສະອອນໃຈປາບປື້ມຢ່າງຫລິງໄຫລຂອງສຽງນົກກໍ່ຣະວີກຮ້ອງ, ເມື່ອນາຍພານກັບຕ່າວ ຄືນມາບ້ານ ລາວກໍ່ເລີ່ມເລົ່າໃຫ້ໝົດທຸກຄົນໃນບ້ານຟັງກ່ຽວກັບ ສຽງອິ່ນອ້ອຍນັ້ນ. ແລະ ແລ້ວຍັງມີ ແມ່ໝ້າຍນາງໜຶ່ງຫລັງຈາກໄດ້ຟັງຄຳເລົ່າຂອງນາຍພານ ກໍ່ເກີດຄວາມຢາກຟັງສຽງນົກກໍ່ຣະວີກຮ້ອງ ດ້ວຍຫູຕົນເອງ ຈຶ່ງຂໍນຳນາຍພານເຂົ້າປ່າດົງກວ້າງ. ນາຍພານກໍ່ບໍ່ຂັດຂ້ອງແລ້ວ ພານາງເຂົ້າປ່າ ດົງເລິກບ່ອນທີ່ລາວເຄີຍໄດ້ຍິນສຽງນົກກໍ່ຣະວີກຮ້ອງເປັນປົກກະຕິ, ພໍໄປເຖິງເຂດນົກຮ້ອງ ນາຍພານກໍ່ຖາມນາງວ່າ "ຟັງດູເຈົ້າ ສຽງນົກຮ້ອງລຳ ໜ້າອອນຊອນໃດເນາະ" ດັ່ງນັ້ນແລ້ວ ນາງໝ້າຍຮູ້ສຶກເຄີ້ມຫລິງໄຫລກັບສຽງ ຂອງນົກຢ່າງໝົດຈິດໝົດໃຈ ນາງຈຶ່ງຈົ່ມພຶມພຳອອກມາວ່າ "ຂ້ອຍຈະຕ້ອງເຮັດແນວໃດນໍ ເມື່ອໃດທີ່ຂ້ອຍປາຖະໜາຢາກຟັງສຽງນັ້ນອີກ? ຖ້າຂ້ອຍ ຢູ່ໃນປ່ານີ້, ບໍ່ມີອາຫານກິນ ຫຼືບ່ອນພັກເຊົາ ແລະ ສັດປ່າອາດຈະທຳຮ້າຍຂ້ອຍ, ຖ້າຂ້ອຍ ຢາກກັບມາປ່າແຫ່ງນີ້ເລື້ອຍ ໆ ກໍ່ສຸດແສນຈະລຳບາກ ທາງໄກ" ແລະ ແລ້ວລາວກໍ່ເກີດມີແນວຄິດ ຂຶ້ນມາ "ຂ້ອຍຈະຕ້ອງປະດິດສ້າງເຄື່ອງເສບໃດໜຶ່ງທີ່ອອກສຽງຄ້າຍກັບສຽງຮ້ອງຂອງນົກກໍ່ຣະວີກ" ເມື່ອນາງໝ້າຍກັບຄືນມາເຖິງບ້ານ, ລາວກໍ່ທົດລອງເຮັດເຄື່ອງເສບຫລາຍຊະນິດ, ບາງກໍ່ໃຊ້ນິ້ວ

[1] Miller, Terry E.: Kaen Playing and Mawlum Singing in Northeastern Thailand
ນົກກໍ່ຣະວີກ ອາດຈະເປັນຊື່ນົກໃນວັນນະຄະດີ

ດີດດິ່ງ, ບາງກໍ່ເປົ່າ, ບາງກໍ່ຫັກ ໃນທີ່ສຸດລາວກໍ່ໝົດກຳລັງໃຈ ບໍ່ມີຫົນທາງວ່າຈະສ້າງຂຶ້ນໃຫ້ໄດ້ເໝືອນສຽງນົກຮ້ອງຕາມທີ່ນາງໄດ້ຍິນມາ. ສຸດທ້າຍມາ ນາງກໍ່ຕັ້ງໃຈໃໝ່ ໂດຍເລີ່ມຕັດໄມ້ເຮັ້ຍເປັນທ່ອນສັ້ນໜຶ່ງທ່ອນຄ້າຍຄືກັນກັບຂຸ່ຍ ແລະ ພະຍາຍາມຊອກເອົາສຽງຢ່າງພິຖີພິຖັນໃຫ້ຄືກັບສຽງນົກກົຣະວິກ ເຮັດຢູ່ແນວນັ້ນນານແສນນານຈົນໄດ້ສຽງເພິ່ງພໍອົກພໍໃຈດ້ວຍຄວາມສຳເລັດ.

ເມື່ອໄດ້ເຄື່ອງເສບທີ່ຕົນສ້າງຂຶ້ນແລ້ວກໍ່ປາຖະໜາຢ່າງແຮງກ້າຢາກນຳຖວາຍພຣະຣາຊາປະສັນຕິໂກສົນ, ນາງໄດ້ເລີ່ມຊອກຫາຄົນຜູ້ໃດຜູ້ໜຶ່ງພໍຈະຊ່ວຍອຸປະຖຳໃນການເຂົ້າພົບຢ່າງເປັນທາງການຂອງລາວ. ໃນເວລານັ້ນ ເມື່ອລາວຊອກໄດ້ຄົນຊ່ວຍແລ້ວລາວກໍ່ໄດ້ປະດິດສ້າງເຄື່ອງເສບເພີ່ມອີກຫລາຍແນວ, ປັບປຸງຕົວເຄື່ອງເສບ ແລະ ສຽງໄດ້ດີຂຶ້ນເລື້ອຍ ໆ ຈົນເຮັດໃຫ້ລາວໄດ້ມີປະສົບການຫລວງຫລາຍຂຶ້ນ.

ເມື່ອເຄື່ອງເສບໄດ້ສ້າງສຳເລັດເປັນທີ່ຄັກໃນໃຈແລ້ວ ລາວກັບຜູ້ທີ່ຊ່ວຍອຸປະຖຳກໍ່ພາກັນເຂົ້າວັງ, ເມື່ອເຖິງປະຕູວັງ ທັງສອງກໍ່ໄດ້ຖືກຊັກຖາມ ແລະ ໄດ້ຮັບອະນຸຍາດໃຫ້ເຂົ້າເຝົ້າ, ທັງສອງເຂົ້າໄປສູ່ຫ້ອງໂຖງ ແລະ ນັ່ງກົ້ມໝອບຢູ່ຕໍ່ໜ້າພຣະຣາຊາ ຊຶ່ງປະທັບນັ່ງໄກເຕີບ, ພຣະຣາຊາ ຖາມຂຶ້ນວ່າ: "ພວກເຈົ້າທັງສອງເຂົ້າເຝົ້າເຮົາພຣະອົງດ້ວຍເຫດໃດ?" ຊາຍທີ່ນຳພາແມ້ໝ້າຍມາເຝົ້າຕອບຮັບ "ຂ້ານ້ອຍໄດ້ນຳພານາງໝ້າຍຜູ້ນີ້ມາເຂົ້າເຝົ້າພຣະອົງ ເພາະນາງຢາກຈະສະເໜີ ເຄື່ອງດົນຕຣີຊະນິດໃໝ່ທີ່ນາງຄົ້ນຄິດປະດິດຂຶ້ນມາເອງຕໍ່ພຣະອົງ, ນາງມີຈຸດປະສົງອັນແຮງກ້າ ນຳມາຖວາຍແດ່ພຣະອົງດ້ວຍຄວາມເຄົາລົບຢຳເກງຢ່າງສຸດອົກສຸດໃຈ ແລະ ສັນລະເສີນພຣະອົງ ເໝືອນພຣະອົງເປັນເຈົ້າຊີວິດຂອງພວກເຮົາ" ພຣະຣາຊາປະທັບໃຈ ແລະ ພໍໃຈເມື່ອໄດ້ຟັງນິທານເລົ່າຈາກນາງໝ້າຍກ່ຽວກັບທີ່ມາຂອງການສ້າງເຄື່ອງເສບນີ້, ພຣະຣາຊາໄດ້ແນະນຳໃຫ້ນາງໝ້າຍຫລິ້ນເຄື່ອງດົນຕຣີຂອງນາງ ໃຫ້ພຣະອົງຟັງ ດ້ວຍນ້ອມເກົ້ານ້ອມກະໝ່ອມ ນາງໝ້າຍຕັ້ງໜ້າຕັ້ງຕາຫລິ້ນດົນຕຣີສຸດຝີມື ແລະ ທຸ້ມເທຄວາມຮູ້ສຶກອອກຜ່ານດົນຕຣີທີ່ນາງປະດິດແຕ່ງ. ເມື່ອສຽງເສບດົນຕຣີສິ້ນສຸດລົງ ນາງໝ້າຍກໍ່ຖາມພຣະຣາຊາວ່າ: "ສຽງດົນຕຣີນີ້ມ່ວນຈັບອົກຈັບໃຈພຣະອົງຫຼືບໍ່?" ພຣະອົງບໍ່ໄດ້ຊົງຕອບຄືນ ແຕ່ຂໍຮ້ອງໃຫ້ນາງໝ້າຍນັ້ນຫລິ້ນດົນຕຣີຕໍ່ໄປເລື້ອຍ ໆ ຈົນເພງແລ້ວເພງເລົ່າ ມາຮອດເພງສຸດທ້າຍນາງໝ້າຍກ່າວທູນ "ນະບັດນີ້ພຣະອົງພໍພຣະໄທແລ້ວຫຼືຍັງ" ພຣະຣາຊາຊົງຕອບ "ເທື່ອນີ້ແຄນແດ່" ແລະ ນາງໝ້າຍກໍ່ເວົ້າວ່າ "ເຄື່ອງເສບຊະນິດນີ້ຈະຕ້ອງຮຽກຊື່ວ່າແນວໃດ?" ພຣະຣາຊາຊົງຕອບ "ເຈົ້າຈົ່ງຮຽກຊື່ເຄື່ອງດົນຕຣີນີ້ຕາມຄຳສັບທີ່ເຮົາວ່າ ແຄນ".

ໝໍແຄນໃນຕຳນານທີສອງນີ້ແມ່ນແມ່ຍິງ ເປັນຜູ້ຜະລິດຂຶ້ນເພື່ອຕອບສະໜອງໃຫ້ກັບ ຄວາມໄຄ່ໃນສຽງນົກກົຣະວິກທີ່ຕົນໄດ້ຟັງແລ້ວຖວາຍຕໍ່ພຣະຣາຊາ. ອີກຕຳນານໜຶ່ງທີ່ກ່າວມາຂ້າງເທິງກໍ່ຄ້າຍທຳນອງດຽວກັນ.

ຫໍສະໝຸດແຫ່ງຊາດ ລົງເກັບກຳຂໍ້ມູນດົນຕຣີພື້ນເມືອງຢູ່ບ້ານເພຍໃໝ່, ເມືອງເຊກອງ, ແຂວງເຊກອງ. ປະກົດວ່າເຜົ່າກະຕູ່ຄວັດໄມ້ເປັນຮູບຄົນ, ສັດ ແລະ ຮູບແມ່ຍິງນັ່ງເປົ່າແຄນ

ລຽງໄວ້ເທິງ ຂື່ຫລັກເຮືອນຂອງເຂົາ, ເຂົາເຈົ້າ ຈະນິຍົມຄວັດຮູບແທນຜີບ້ານຜີເຮືອນ, ຜີບັນພຣະບຸຣຸດ, ໃນນັ້ນຈະເຫັນຮູບຄວັດແມ່ຍິງເປົ່າແຄນ.

ຂ້າພະເຈົ້າສົງໃສ ຖາມວ່າ ແມ່ນຜູ້ຍິງຫຼືຜູ້ຊາຍເປົ່າ ເພາະມັນປະຫລາດໃຈ, ເປັນຫຍັງຈຶ່ງມີສັນຍາລັກແມ່ຍິງເປົ່າແຄນ, ມີມາແຕ່ບູຮານເຄີຍນິຍົມຄວັດໄວ້ເປັນສິຣິມຸງຄຸນ, ນັບຖື. ໃນຕົວຈິງກໍ່ປະກົດວ່າ ຊົນເຜົ່າແງະ (ແຂວງເຊກອງ) ແມ່ຍິງຜູ້ມີອາຍຸສູງແດ່ກໍ່ຈະເປົ່າແຄນຫ້າ, ແຄນເຈັດໃນທຳນອງລຳ ສຳນຽງເຜົ່າຂອງເຂົາເຈົ້າ ແລະ ດີດກະຈັບປີ່, ຕີກອງ. ນອກນັ້ນ ກໍ່ຍັງເຫັນເປົ່າຊຸ່ຍແບບປະດິດຂຶ້ນເອງ, ອັນປະທັບແມ່ນໃຊ້ດັງເປົ່າ.

ແນວໃດກໍ່ດີ ຂໍ້ມູນທາງຕຳນານ ແລະ ສິ່ງສືບທອດທີ່ຕົກຄ້າງຢູ່ໃນການດຳລົງຊີວິດຂອງບາງເຜົ່າໃນແຂວງເຊກອງ, ສາລະວັນ ກໍ່ພໍຈະຢັ້ງຢືນໄດ້.

ໃນບົດຄວາມຂອງຂ້າພະເຈົ້າອາດຈະບໍ່ໄດ້ຄົ້ນເຖິງປະເພດແຄນ ຂອງບັນດາຊົນເຜົ່າ ທີ່ຢູ່ໃນດິນແດນລາວເຮົາ, ທຸກຊົນເຜົ່າລາວລ້ວນແຕ່ມີແຄນສະເພາະໃຜລາວ ຈະຜິດພ້ຽນທາງຮູບໂສມເລັກນ້ອຍ ເຊັ່ນ: ແຄນມົ້ງ (ລາວສູງ), ແຄນທວນ (ໝາກນ້ຳເຕົ້າຂອງເຜົ່າຕະໂອ້ຍ, ແຂວງອັດຕະປື).

### 4.1.2. <u>ແຄນນັ້ນມີມາແຕ່ເມື່ອໃດ?</u>

ຖ້າຄົ້ນຕາມຫລັກວິທະຍາສາດແລ້ວ, ຍັງບໍ່ທັນມີໃຜຄົ້ນຄວ້າພົບຈຸດເລີ່ມຕົ້ນຂອງ ແຄນ ວ່າແມ່ນໃຜເປັນຜູ້ສ້າງມັນຂຶ້ນມາ ແຕ່ແນ່ນອນ "ແຄນລາວ" ດວງຮຽວ ໆ ນີ້ ແມ່ນຄົນລາວສ້າງ ເພາະສຽງດົນຕຣີກົມກືນກັບສຽງຂັບລຳຂອງສຳນຽງສຽງເວົ້າພາສາລາວແທ້ ໆ, ເອົາໄປເປົ່າກັບ ສຳນຽງລຳຂອງພາສາອື່ນກໍ່ໄດ້ຢູ່ ແຕ່ມັນເຂີນ ໆ ວາດໃດວາດໜຶ່ງ.

ຍ້ອນຮ່ອງຮອຍໃນອະດີດຕະການໃນສະໄໝບູຮານ, ຊຶ່ງຊົນເຜົ່າລາວເຮົາຈຳນວນໜຶ່ງເນົາຢູ່ຖິ່ນຖານ ແດນອານາຈັກໜອງແສ, ດິນແດນປະເທດຈີນປັດຈຸບັນ, ຊຶ່ງໃນໄລຍະນັ້ນແມ່ນຣາຊອານາຈັກລາວໜອງແສ ໄດ້ຮັບຄວາມຈະເລີນຮຸ່ງເຮືອງ ແລະ ກວ້າງຂວາງມາຕັ້ງແຕ່ສະໄໝຂອງພຣະເຈົ້າສິນຸໂລ, ມີອົງກະສັດລາວໄດ້ປົກຄອງສືບຕໍ່ມາຈາກພຣະເຈົ້າສິນຸໂລເຖິງ 13 ອົງ ຄິດເປັນເວລານານເຖິງ 255 ປີ. ຊົນເຜົ່າລາວອີກຈຳນວນໜຶ່ງກໍ່ໄດ້ດຳລົງຄົງຕົວຢູ່ກັບດິນດອນຕອນປັດຈຸບັນນີ້ມາໂດຍກຳເນີດ, ໂດຍມີຫລັກຖານອັນຊັດເຈນຈາກຮ່ອງຮອຍທີ່ນັກຄົ້ນຄວ້າປະຫວັດສາດແລະບູຮານຄະດີຄົ້ນພົບເປັນຫລັກຖານຢູ່ຫລາຍແຫ່ງກ່ຽວກັບມະນຸດບູຮານ ເຊັ່ນ ເຄື່ອງໃຊ້ໃນການດຳລົງຊີວິດຕາມຖ້ຳ ແລະພາຫະນະໃນການຕໍ່ສູ້ກັບທຳມະຊາດຫລາຍຢ່າງ ແຕ່ບໍ່ທັນສາມາດເວົ້າໄດ້ວ່າ ມະນຸດບູຮານລາວເຫຼົ່ານີ້ໄດ້ໃຊ້ດົນຕຣີຊະນິດໃດໃນຫລາຍສະໄໝຕໍ່ ໆ ມາ ແຕ່ອັນທີ່ຊັດເຈນແລະພໍສັນນິຖານໄດ້ນັ້ນ ກໍ່ມີຄ້ອງບ້າງແລະແຄນທີ່ເຄີຍໃຊ້ຄວບຄູ່ກັນມາ ເຊັ່ນ ຄົນບູຮານຈະສະຫລັກຮູບຄົນເປົ່າແຄນ, ຄົນຕີກອງໃສ່ໜ້າກອງແລະໜ້າຄ້ອງບ້າງ. ຄ້ອງບ້າງດັ່ງກ່າວ ໄດ້ຄົ້ນພົບໃນຖິ່ນຖານເຜົ່າ ລາວ - ໄຕ ຢູ່ທາງພາກເໜືອຂອງຫວຽດນາມແລະລາວ.

ອີກຂໍ້ມູນໜຶ່ງພໍອ້າງອີງວ່າ ແຄນ ມີມາແຕ່ດົນນານຄູ່ກັບເຊື້ອຊາດລາວໄດ້ນັ້ນ, ໄດ້ມີການບັນທຶກເລົ່າໃນປຶ້ມປະຫວັດສາດລາວ ຂຽນໂດຍຍາພໍ່ມະຫາສີລາ ວິຣະວົງ ໃນບົດປະເພນີລາວອານາຈັກໜອງແສ ໄດ້ຂຽນກ່ຽວກັບດົນຕຣີ ແລະ ການລ້ຽງແຂກ. ຊາວໜອງແສເປົ່າເຄື່ອງເສບຢ່າງໜຶ່ງເຮັດດ້ວຍໝາກແຕງຊະນິດໜຶ່ງ (ເຫັນຈະແມ່ນໝາກນ້ຳເຕົ້າ) ກັບໄມ້ ຮຽກວ່າ ຜົ້ວຊັ້ງ; ຜົ້ວຊັ້ງນັ້ນມີຮູສຳລັບນັບ 5 ຮູ ເມື່ອເອົາເຫລົ້າຕ້ອນຮັບແຂກໃຊ້ຜົ້ວຊັ້ງຮອງຈອກເຫລົ້າໄວ້ ແລ້ວຂໍໃຫ້ໄທແຂກດື່ມ.

ນັບວ່ານັກປາດທາງວິຊາປະຫວັດສາດຈຳນວນໜຶ່ງ ໄດ້ລົງຄວາມເຫັນວ່າ ພວກອ້າຍລາວຕັ້ງຫລັກຖານຢູ່ດິນແດນລະຫວ່າງແມ່ນ້ຳຮວງໂຫ ກັບແມ່ນ້ຳຍັ້ງຈີ້ (ຢັງຊີກຽງ) ອັນເປັນເຂດໜຶ່ງຂອງຈີນດຽວນີ້. ພວກອ້າຍລາວທຳມາຫາກິນດ້ວຍການກະສິກຳ ແລະຄົງໄດ້ມາຕັ້ງຫລັກຖານຢູ່ເລາະລຽບແມ່ນ້ຳຮວງໂຫນີ້ ແຕ່ລະຫວ່າງກ່ອນ ພຸດທະສັກກະຣາດ 2500 ປີມາແລ້ວ.

ມີບາງຂໍ້ມູນທີ່ສາມາດຢັ້ງຢືນໄດ້ອີກວ່າແຄນລາວມີມາແຕ່ໃດນັ້ນ ແຄນມີຕົ້ນກຳເນີດຢູ່ໃນກຸ່ມຄົນລາວ (ໄຕລາວ) ຢູ່ລຸ່ມນ້ຳຂອງໂດຍສະເພາະ ແລະແຜ່ກະຈາຍອອກໄປບາງທ້ອງຖິ່ນໃກ້ຄຽງໂດຍສະເພາະໃນກຸ່ມຊົນເຜົ່າລາວ-ໄຕ ທັງມວນ. ການລຳກໍ່ເປັນມະຫໍຣະສົບ ທີ່ຂຶ້ນຊື່ລືນາມເປັນທີໜຶ່ງຂອງລາວ ເມື່ອມີບຸນມີງານບັດ ຂັດຕະເລີກ ຕ້ອງມີໝໍລຳໝໍແຄນຜູ້ມີຊື່ສຽງມາເສບກ່ອນ ຄົນກໍ່ຈະຟັງກັນຈົນຮຸ່ງຈົນແຈ້ງ ການລຳກໍ່ມີສອງແບບໃຫຍ່ ລຳສັ້ນແລະລຳຍາວ ລຳສັ້ນເປັນລຳໂຈດແກ້ຕອບບັນຫາ ເສັ່ງກອນ ກອນກ້ຽວ ກອນເດີນດົງ ກອນລຳປະຫວັດສາດ ລຳພູມສາດ ລຳຊີງຊູ້, ລຳຊີງຜົວ, ລຳຊີງເມຍ, ລຳຜະຫຍາ, ສ່ວນລຳຍາວກໍ່ມີ ລຳລ່ອງຂອງ ລຳເຕີ້ຍ ລຳເຊີ້ງ ລຳພື້ນ ແລະອື່ນ ໆ ເປັນຕົ້ນ.

ດົນຕຣີນີ້ ໃນໜັງສືວັນນະຄະດີບູຮານລາວແທ້ ໆ ນັ້ນເອີ້ນວ່າເຄື່ອງເສບ ໄດ້ແກ່ ເຄື່ອງດີດ ເຄື່ອງສີ ເຄື່ອງຕີ ເຄື່ອງເປົ່າ ຊະນິດຕ່າງ ໆ ຄື ຄ້ອງ ກອງ ຊໍ ປີ່ ແຄນ ສວານໄລ ແຕ ຕຸດ ຂຸ່ຍ ສິ່ງ ແຊ່ງ ແລະອື່ນ ໆ ດົນຕຣີເຄື່ອງເສບຂອງລາວເຮົາທີ່ກ່າວມານີ້ ໄດ້ປະກົດຂຶ້ນເມື່ອໃດແທ້ນັ້ນກໍ່ຍັງບໍ່ສາມາດຕອບໄດ້ຢ່າງຄັກແນ່ແທ້ ແຕ່ກໍ່ເຊື່ອວ່າພວກເຮົາໃຊ້ແຄນກ່ອນຄ້ອງວົງແລະລະນາດທີ່ຮັບເອົານຳຫລັງ.

ຕະກຸນ ລາວ-ໄຕ ແມ່ນຊົນເຜົ່າໜຶ່ງທີ່ເຄີຍໃຊ້ແຄນມາແຕ່ດຶກດຳບັນດັ່ງທີ່ໄດ້ອະທິບາຍມາແລ້ວນັ້ນ ຫລັກຖານກ່ຽວກັບແຄນທີ່ເກົ່າແກ່ທີ່ສຸດແມ່ນພົບໃນຍຸກໂລຫະ ປະມານ 3000 ປີມາແລ້ວ ໂດຍມີຮ່ອງຮອຍທີ່ພົບໃນຄ້ອງບ້າງບູຮານ (ຈະມີຮູບສະຫລັກຄົນເປົ່າແຄນ) ຊຶ່ງເປັນຄ້ອງທີ່ຄົນບູຮານໃຊ້ຕີໃຫ້ເຂົ້າກັບແຄນ ຈະນຳໃຊ້ໃນພິທີກຳສຳຄັນ ເຊັ່ນ ການບູຊາຍັນ ເປັນຕົ້ນ.




Ringing the bell(1) Playing on Khên(2)



Surface of bronze drum

ພາບຄ້ອງບ້າງທີ່ມີຮູບຄົນເປົ່າແຄນ

ເອກະລັກລາວໃນນິທານຂຸນບູຣົມກໍ່ວ່າ "ກິນເຂົ້າໜຽວ ຊ້ຽວໝາກ ຢູ່ເຮືອນມີຮ້ານ ຢູ່ກວ້ານມີເສົາ ເປົ່າແຄນ ກໍ່ວ່າລາວແລ".

ໃນມະຫາກາບ ທ້າວຮຸ່ງທ້າວເຈືອງ ຕອນນາງງ້ອມເຊີນແຖນລົງເຕົ້າຄວ່າງ (ໜ້າ 23) ກໍ່ວ່າ:

| | |
|---|---|
| ຫລິງເຫັນດາວດາດເຫລື້ອມ | ແຝງຝ່າຍບິວລະພາ ພຸ້ນເຍີ |
| ຄອນ ໆ ເປັນ | ດັ່ງໜາວຈັກໄຂ້ |
| ເທື່ອນີ້ບຸບຜາຜຽນ | ກົງລຽນລານດອກ |
| ສາວບ່າວຜົ້ງ | ຊົມຟ້າໄຄ່ເຫັນ |
| ສອງຂອກທັງນ | ສຽງປີ່ພິນແຄນ |
| ຣົມ ໆ ມັນ | ຊູ່ພາຍທຸມພ້ອນ |
| ເຂົາຈິ່ງເຊີນໃບເຈົ້າ | ແສນທອງຊ້ອຍຊັ່ງ |
| ນ້ອງແຜ່ນຜູ້ | ຄີງຄ້ອມຝ່າຍພຽງ |

ຕອນທ້າວຮຸ່ງມາຮ່ວມງານເຕົ້າຄວ່າງ

| | |
|---|---|
| ກາກ່ອງທ້າວທີ່ງຮູບ | ຮຽງສອງ |
| ຣົມ ໆ ສາວບ່າວເກົາ | ກວນຖ້ອຍ |
| ຕູນີ້ຊາວເມືອງໃຕ້ນາຄອງ | ແຄນມາກ |

ອີກຢ່າງໜຶ່ງ ແຄນມີຄວາມສຳຄັນໃນປະເພນີລາວຮີດສິບສອງຄອງສິບສີ່ ກໍ່ເວົ້າເຖິງປະເພນີລົງຄວ່າງ ໃນລະດູແລ້ງຫຼືໜາວ ພໍເກັບກ່ຽວເຂົ້າມາແລ້ວ ໃນໝູ່ບ້ານຈະມີການລົງຄວ່າງ

ຕອນກາງຄືນ ສາວ ໆ ກໍ່ຈະກໍ່ໄຟ ແລະນັ່ງຝີງໄຟ ປັ່ນຝ້າຍ ຕາມລານບ້ານ ເອີ້ນວ່າລິງຄວ່າງ ຂະນະສາວ ໆ ນັ່ງປັ່ນຝ້າຍ ໜຸ່ມ ໆ ໃນບ້ານດຽວກັນຫຼືບ່າວບ້ານໃກ້ຄຽງກໍ່ມາເປົ່າແຄນ.

ໃນຮີດສິບສອງນັ້ນ ມີງານບຸນປະຈຳເດືອນ ເຊັ່ນບຸນບັ້ງໄຟ ບຸນຊ່ວງເຮືອ ອອກພັນສາ ກໍ່ນຳໃຊ້ແຄນ ເປັນອຸປະກອນດົນຕຣີຫລັກໃນການມ່ວນຊື່ນ.

ໃນຮີດຄອງລ້ຽງຟ້າ ລ້ຽງແຖນ ຫຼືຮີດຜີເຊື້ອບ້ານ ເຊື້ອເຮືອນ ກໍ່ແມ່ນຕົ້ນຕຳຣາແຄນລາວ ໂດຍໃຊ້ແຄນເພື່ອບວງສວງຟ້າແຖນຂອງໄຕ-ລາວ ຕາມຄວາມເຊື່ອຖືມາແຕ່ບູຮານວ່າຜີຟ້າ ຜີແຖນແມ່ນເທບພະເຈົ້າຜູ້ສັກສິດ ທີ່ຈະຄຸ້ມຄອງປົກປັກຮັກໂລກໄພໄຂ້ເຈັບບໍ່ໃຫ້ເກີດຂຶ້ນ ຈຶ່ງມີປະເພນີການໄຫວ້ຜີໄທ້ ຜີນາງທຽມ ກໍ່ຄືອັງເຊີນຜີມາເຂົ້າຊົງ ແລ້ວຟ້ອນລຳສະໜຸກສະໜານ ໂດຍມີສຽງແຄນ ເປັນຈັງຫວະຕ່າງ ໆ ແຕ່ຕອນແລງຮອດຕອນເຊົ້າຜີຈຶ່ງລາຈາກການເຂົ້າຊົງ.

ການໄຫວ້ຜີນີ້ ແມ່ນມີສຽງແຄນເປັນຫລັກ ໂດຍມີໝໍແຄນ ສອງ ສາມຄົນ ຜັດປ່ຽນກັນເປົ່າປະກອບຕັ້ງແຕ່ ເຮັດພິທີອັງເຊີນຜີເຂົ້າຮ່າງ ການຂັບລຳຂອງຜູ້ເຂົ້າຊົງ ແຕ່ຕົ້ນຈົນສຸດທ້າຍ ຈະໃຊ້ແຄນເປັນດົນຕຣີເອກ ແລະມີການຕີບມື ເຄາະໄມ້ ປະກອບເປັນຈັງຫວະ ທຸກຄົນຈະມີຜີປະຈຳຂອງຕົນບໍ່ນ້ອຍກວ່າ 1 ອົງ ຈະມີຫໍຜີປະຈຳບ້ານຂອງຕົນ.

ແລະອີກຂໍ້ມູນໜຶ່ງທີ່ປະກົດຢູ່ໃນໜັງສືຂຸນບູຣົມ ຕຳນານລາວບູຮານທຸກສະບັບ ສະເພາະສະບັບພະມ່ອມແກ້ວ ຂຽນຂຶ້ນເມື່ອ ຄ.ສ 1627 (ຈ.ສ 989) ນັ້ນໄດ້ກ່າວໄວ້ຕອນໜຶ່ງວ່າ "ແຖນແພນເຈົ້າສີຄົນທັບລົງມາສອນຄົນ ເມືອງລຸ່ມ ລິດຈາລະນາ ເປັນເຄື່ອງເສບ (ເຮັດເຄື່ອງເສບຕ່າງ ໆ) ຄື: ຄ້ອງ ປີ່ ແຄນ ສວານໄລ ແຕ ຕຸດ ກາລະສັບປະດັບທຸກເຍື່ອງເສບຫລັ້ນໃນເມືອງລຸ່ມທຸກປະການ".

ຈາກຂໍ້ມູນທີ່ກ່າວມານີ້ ເຫັນໄດ້ວ່າ ແຄນ ກໍ່ແມ່ນ ໜຶ່ງໃນເຄື່ອງເສບຂອງລາວທີ່ໄດ້ກຳເນີດເກີດຂຶ້ນມາພ້ອມກັບການປະກົດຕົວຂອງຄົນລາວໃນຜືນແຜ່ນດິນແຫ່ງນີ້. (ຂໍ້ມູນຈາກ "ແຄນມີຕົ້ນກຳເນີດ...ໃນຜືນແຜ່ນດິນແຫ່ງນີ້ " ຖອດມາຈາກ ໜັງສື ສິບປາກເວົ້າບໍ່ທໍ່ຕາເຫັນ: ເນື້ອໃນວາງສະແດງພິພິ ທະພັນແຫ່ງຊາດລາວ ໂດຍ ດຣ. ສຸເນດ ໂພທິສານ ໜ້າ 77-79)

ອີກຂໍ້ມູນຈຳນວນໜຶ່ງທີ່ກ່ຽວກັບ"ແຄນ" ແຕຣີ ມີແຣ ໄດ້ຂຽນໄວ້ວ່າ "ເຈົ້າສົມສະນິດ ໄດ້ບັນຍາຍເລື້ອງແຄນລາວ, ແມ່ນການວິວັດມາຈາກໂຫວດ. ໂຫວດແມ່ນເຄື່ອງດົນຕຣີຊະນິດທີ່ເຮັດດ້ວຍໄມ້ອໍ້ ຫຼືໄມ້ເຮັ້ຍລຳນ້ອຍສໍ່ານິ້ວກ້ອຍ ຕັດເປັນທ່ອນສັ້ນ ໆ (ເລີ່ມຈາກທໍ່ນິ້ວກ້ອຍແລ້ວ ຍາວ ໆ ຄືກັນກັບນິ້ວມືຍາວສຸດສອງເທື່ອນິ້ວກ້ອຍ, ເໝືອນກັບຂຸ່ຍ) ໃຊ້ຂີ້ສູດຕິດອ້ອມແກນ, ແຕ່ລະລູກຕິດຂີ້ສູດອັດກົ້ນ ຫຼືໃຊ້ປ້ອງຂໍ້ໄມ້ແທນເລີຍ, ແກນກາງມີຫາງເພື່ອໄວ້ຈັບ ຮູບຊົງເໝືອນ ບັ້ງໄຟໝື່ນບັ້ງໄຟແສນ.

ແຄນແມ່ນເຄື່ອງເສບຊະນິດໜຶ່ງທີ່ມີຄວາມກ່ຽວພັນກັນເຄື່ອງດົນຕຣີອື່ນ ໆ ທີ່ມີລີ້ນສຽງ ແລະ ໃຊ້ປາກເປົ່າລົມຊ່ວຍຈຶ່ງຈະອອກສຽງ, ເປັນທີ່ຮູ້ຈັກກັນໃນເອເຊຍ ຕັ້ງແຕ່ຍີ່ປຸ່ນເຖິງໄທ, ຕັ້ງແຕ່

ບັງກະລາເທດເຖິງບອກເນໂອ, ອັນທີ່ຮູ້ຈັກດີກວ່າເພິ່ນແມ່ນຊັ້ງ (Sheng) ຂອງຈີນ ຍີ່ປຸ່ນເອີ້ນ ໂຊ (Sho); ເພາະເຄື່ອງດົນຕຣີຊະນິດນີ້ຄ້າຍຄືກັນກັບຊື່ເຄື່ອງດົນຕຣີຂອງລາວໃນສະໄໝລາວໜອງແສເປົ່າ ແລະອີກຊື່ໜຶ່ງທີ່ຄຸ້ນເຄີຍ ຄື ລູຊັ້ງ (Lu Sheng). ລູຊັ້ງນີ້ ແມ່ນເຄື່ອງດົນຕຣີຂອງຊົນເຜົ່າທີ່ດຳລົງຊີວິດຢູ່ທາງພາກໃຕ້ຕາເວັນຕົກຂອງຈີນ ຄຳວ່າ ລູ (Lu) ແປວ່າລີ້ນ (Reed) ສ່ວນຄຳວ່າຊັ້ງ (Sheng) ແມ່ນສັບສຳລັບອະທິບາຍເຄື່ອງດົນຕຣີທີ່ເປົ່າດ້ວຍປາກ ແລະອີກສັບໜຶ່ງລິວຊັ້ງ (Liu Sheng) ຄຳວ່າລິວ (Liu) ແປວ່າ 6. ລິວຊັ້ງ ແມ່ນຊັ້ງທີ່ມີ 6 ລູກ. ເອີ້ນຊື່ໃນພາສາລາວວ່າ ແຄນ (ຖອດຄວາມອອກມາຈາກ ປຶ້ມສາລານຸກົມກ່ຽວກັບດົນຕຣີສາກົນ). ນອກນັ້ນເພິ່ນຍັງໄດ້ຂຽນກ່ຽວກັບການນຳໃຊ້ລິວຊັ້ງຂອງຊົນເຜົ່າມົ້ງ ແລະຊົນເຜົ່າສ່ວນນ້ອຍໃນສະໄໝບູຮານຢູ່ທາງພາກຕາເວັນຕົກສຽງໃຕ້ຂອງຈີນ ເຊັ່ນ ແຄນ 3 ແລະແຄນ 6.

ທີ່ມາຂອງຫີບເປົ່າດົນຕຣີ ຫຼືແຄນຝຣັ່ງ ອາກໂມນິກາ ກໍ່ເຊັ່ນດຽວກັນວ່າ ໃນປີ ຄ.ສ 1777 ຈີນໄດ້ເອົາຊັ້ງ ໄປຝຣັ່ງເສດ ແລະ ຈາກນັ້ນຍ້ອນມີຄວາມນິຍົມ ແລະ ໄດ້ແນວຄິດ ຈຶ່ງສ້າງຫີບເປົ່າເພັງ ອາກໂມນິກາ ຂຶ້ນມາ, ແຕ່ເລື້ອງນີ້ ມີບາງຄົນວ່າ ເຄີຍໄດ້ໄປຮ່ວມກອງປະຊຸມດ້ານດົນຕຣີບອກວ່າ ອາກໂມນິການີ້ແມ່ນໄດ້ແນວຄິດມາຈາກແຄນລາວ.

ຂ້າພະເຈົ້າກໍ່ຄິດທວນຄືນບົດຄວາມຂອງຍາພໍ່ມະຫາສິລາ ວີຣະວົງ ເວົ້າຕອນບົດກ່ຽວກັບດົນຕຣີວ່າ ລາວຊາວໜອງແສ ເປົ່າເຄື່ອງເສບຊະນິດໜຶ່ງ ເອີ້ນກັນວ່າ ຜົວຊັ້ງ, ມາຄິດເບິ່ງ ຄຳວ່າຊັ້ງກັບ Sheng ພາສາຈີນ ອອກສຽງດຽວກັນ ແລະ ໃນປຶ້ມພົດຈະນານຸກົມກ່ຽວກັບດົນຕຣີຂຽນກ່ຽວກັບແຄນ ກໍ່ໄດ້ເວົ້າເຖິງຊັ້ງ = Sheng ມີຄວາມສຳພັນກັບແຄນລາວ.

## 4.2. ລັກສະນະຂອງແຄນ (Description)

ຈາກການປະດິດສ້າງແຄນ, ປະຫວັດສາດໄດ້ຢັ້ງຢືນມາໃນຕຳນານວ່າ: ຜູ້ສ້າງໄດ້ຄິດຄົ້ນຫລາຍຮູບຫລາຍແບບ ແລະ ນຳມາເປົ່າໃຫ້ໄດ້ສຽງທີ່ຕ້ອງການ.

ແຄນລາວ ອາດຈະເລີ່ມທຳອິດດ້ວຍຮູບລັກສະນະແບບງ່າຍດາຍກ່ອນ ອາດຈະໄດ້ແຕ່ສາມຄູ່, ໂດຍເລີ່ມຕົ້ນຈະເອົາໝາກນ້ຳເຕົ້າທີ່ມີກ້ານຄໍ ແລະເຕົ້າທຳມະຊາດຢູ່ແລ້ວ ມາເປັນເຕົ້າຄຸມລົມ ຕົວຢ່າງແຄນໝາກນ້ຳເຕົ້າຂອງອິນເດັຍ, ຂອງຈີນ, ແຄນທວນຂອງຊົນເຜົ່າຕະໂອ້ຍແຂວງອັດຕະປື, ຜົວຊັ້ງຂອງລາວ. ຈາກວິວັດທະນາການຫລາຍຫລີບຫລາຍຕ່າວ ກໍ່ອາດຈະມາເປັນແຄນໃນຮູບຮ່າງລັກສະນະທີ່ເຫັນ ແລະ ໃຊ້ກັນໃນປັດຈຸບັນ.

ໃນເມື່ອກ່ອນສະໄໝບູຮານ, ຕາມທີ່ເຄີຍເຫັນ ແລະ ໄດ້ຍິນເພິ່ນເລົ່າສູ່ຟັງວ່າ ແຄນລາວທີ່ເພິ່ນໃຊ້ເຂົ້າໃນການທຳພິທີທາງຜີໄທ້, ຜີເມືອງ ຈະໃຊ້ແຄນດວງຍາວ 7-8 ສອກ ປີ 1952 ທີ່

ບ້ານເກີດຂອງຂ້າພະເຈົ້າ (ຊຽງຂວາງ) ໄທບ້ານພາ (ສຽງປາກສຳນຽງໄທດຳປົນພວນ) ໄດ້ເອົາແຄນເກົ່າແກ່ມາຕ້ອນພໍ່, ແຄນນັ້ນຍາວ 7 ສອກ 7 ຄູ່ ແລະ ແຄນ 9 ຄູ່ ຍາວ 8 ສອກ ; ແຄນຈະມີຂະໜາດຍາວເປັນສ່ວນຫລາຍ, ແຕ່ເນື່ອງຈາກສະພາບຫຍຸ້ງຍາກໃນການຖືໄປມາ ແລະ ນຳໃຊ້ຂອງຜູ້ເປົ່າ (ເພາະມັນໜັກ) ຈຶ່ງນິຍົມກັນໃຊ້ຂະໜາດມາດຕະຖານ 2 ທາ 2 ສອກເຄິ່ງ, ຍົກເວັ້ນວົງແຄນທີ່ຕ້ອງໄດ້ໃຊ້ແຄນຕາມຂະໜາດຕ້ອງການ.

ລັກສະນະແຄນລາວຈະຜະລິດໃນ 4 ຂະໜາດ ຂຶ້ນກັບຈຳນວນຂອງລູກແຄນ ແລະ ແຄນທີ່ນ້ອຍສຸດ ເອີ້ນວ່າແຄນຫົກ ມີ 3 ຄູ່ ມີ 6 ລູກແຄນ. ແຄນ 7 ຈະມີ 7 ຄູ່ ມີ 14 ລູກແຄນ, ແຄນ 8 ຈະມີ 8 ຄູ່ ມີ 16 ລູກແຄນ, ແຄນ 9 ຈະມີ 9 ຄູ່ ມີ 18 ລູກແຄນ.

ໃນບົດວິທີຮຽນເປົ່າແຄນຂອງອາຈານ ສັນຕິ ພິມສຸວັນ ຂຽນໄວ້ວ່າ: ແຄນລາວມີ 3 ຊະນິດ (ແຄນ 6, 7, 8) ອາດຈະປັນຊະນິດແຄນທີ່ໃຊ້ເປັນປົກກະຕິໃນທົ່ວສັງຄົມ ຫຼືໃນລະດັບມາດຕະຖານສາກົນ ອີງໃສ່ຕຳລາສາກົນ. ແຕ່ຄວາມຈິງແລ້ວ ຈະວ່າແຄນມີ 4 ຂະໜາດກໍ່ຍັງບໍ່ພຽງພໍ ເພາະວ່າແຄນທີ່ຄົ້ນພົບ ແຄນ 5 ຄູ່ ແລະ ແຄນ 6 ຄູ່ ກໍ່ຍັງມີໃຫ້ເຫັນ ແລະ ນິຍົມໃຊ້ກັນຢູ່; ແຄນ 5 ແລະ ແຄນ 6 ນີ້ ເພິ່ນເອີ້ນແຄນ 10 ແລະ ແຄນ 12.

**ສ່ວນປະກອບຂອງແຄນ 1 ດວງ: (ພາບປະກອບ : ແຄນແປດ)**



<u>ດວງແຄນ</u>: ໝາຍເຖິງຕົວແຄນນັ້ນເອງ ປະກອບດ້ວຍລູກແຄນ (ຈັດເປັນຄູ່ ໆ) ມີເຕົ້າລົມ, ພາຍໃນລູກແຄນແຕ່ລະລູກຈະມີລີ້ນໃຫ້ສຽງ ; ລະຫວ່າງການຈັດລຽງລູກແຄນເບື້ອງຊ້າຍເບື້ອງຂວາ ຈະມີໄມ້ສີ່ຫຼ່ຽມແປ ຂະໜາດລວງກວ້າງ 2 ມມ. ແລະ ຍາວເທົ່າຄວາມໜາຂອງແຄນ ເພື່ອຂັ້ນກາງ ບໍ່ໃຫ້ລູກແຄນເຕື່ອຍ ແລະ ຕິດກັນເພື່ອໃຫ້ມັນຊົງຮູບແຂງແຮງ, ແລະ ບ່ອນທີ່ເພິ່ນວາງໄມ້ຂັ້ນນັ້ນຈະຕ້ອງມັດຄຽນດ້ວຍເຊືອກ, ຕອກຕົວໄມ້ໄຜ່ຫຼືເຄືອຍານາງ (ປັດຈຸບັນແຄນວຽງຈັນມັກໃຊ້ສາຍນິລົງມັດ ແລະ ຕອກຈັກຈາກໄມ້ໄຜ່).

<u>ລູກແຄນ</u>: ລູກແຄນລວມກັນທັງໝົດເປັນຄູ່ ໆ (2 ຄູ່ທຳອິດ) ຈະເອີ້ນວ່າໄມ້ກູ່ແຄນ (ເພິ່ນເອີ້ນຕາມຊື່ລູກກູ່ ເພາະເປັນລູກຄູ່ທຳອິດຮຽກເອົາສຽງ), ແຕ່ເມື່ອຮຽກລູກດ່ຽວແຍກກັນຈະເອີ້ນວ່າລູກແຄນ, ແຕ່ລະລູກ ຈະມີຊື່ເອີ້ນຕາມຊື່ດົນຕຣີພື້ນເມືອງຂອງລາວ, ຊື່ນັ້ນໄດ້ມາຈາກການຈັດຮຽບຮຽງສຽງ ແລະສອດຄ່ອງ ກັບນິ້ວມືທີ່ໃຊ້.

<u>ແຄນ 6</u>: ແຄນ 6 ທີ່ອະທິບາຍໃນບົດຄວາມນີ້ ໝາຍເຖິງ ຊື່ແຄນທີ່ຄົນບູຮານເຄີຍເອີ້ນກັນມາເປັນແຄນທີ່ນ້ອຍສຸດ (ອາດຈະເປັນກົກເຫງົ້າຂອງແຄນລາວເມື່ອສະໄໝເຮັດແຄນເບື້ອງຕົ້ນ ຕາມຕຳນານໄດ້ກ່າວໄວ້) ແຄນ 6 ນີ້ມີພຽງ 3 ຄູ່ ແຕ່ເວລາເພິ່ນເອີ້ນຊື່ ຊຳພັດເອີ້ນຕາມລູກແຄນ ທີ່ບັນຈຸ; ແຕ່ຂໍໃຫ້ສັງເກດມາໃນສະໄໝນີ້ພາກັນເອີ້ນແຄນ 3 ເພາະມີ 3 ຄູ່ ; ແລະ ສັງເກດອີກ ແຄນ 6 ຄູ່ ທີ່ມີ 12 ລູກ ເພິ່ນຈະເອີ້ນວ່າແຄນ 12, ແຕ່ດຽວນີ້ພາກັນເອີ້ນແຄນ 6 ເພາະມີ 6 ຄູ່ (ສຳລັບແຄນ 6 ນີ້ສ່ວນຫລາຍຈະໃຊ້ເປົ່າໃນພວກຊົນເຜົ່າລາວເທິງ (ເຜົ່າຂະມຸ ແລະ ເຜົ່າອື່ນ ໆ ທາງພາກໃຕ້). ນອກຈາກນີ້ກໍ່ຍັງມີແຄນ 10 ມີ 5 ຄູ່ ຂອງເຜົ່າຍະເຫີນ.

### 4.2.1. <u>ແຄນ 6: ຮູບຮ່າງ ແລະ ຕຳແໜ່ງ, ຊື່ແຕ່ລະລູກ ຂຽນເປັນໂນດສາກົນແລະຕົວເລກ</u>




F = 4, D = 2, C' = 1

A = 6, G = 5, C = 1

ຄູ່ທີ 1: ຂ. (ຂວາ) ແມ່ເຊ (ຄວາມໝາຍເຖິງແມ່ຫຼືຍິງໃຫຍ່ (ກົກເຄົ້າ) ຫຼື. ເຊ ຂວາ, ຫຼືເພິ່ນເອີ້ນອີກຊື່ໜຶ່ງວ່າ ໂປ້ຂວາ ສຽງ 1 = C, ຊ. (ຊ້າຍ) ໂປ້ຊ້າຍ ສຽງ 1' = C.

ຄູ່ທີ 2: ຂ. (ຂວາ) ສະແນນ (ສະແນນ ແມ່ນຄຳສັບໃນພາສາວັນນະຄະດີ ກ່ຽວພັນກັບຄວາມຮັກ, ຕຽງສະແນນ, ແປ້ນສະແນນ (ບ່ອນສຳລັບໄວ້ນັ່ງ), ໃນບູຮານຜູ້ຍິງຈະນັ່ງເຮັດວຽກ, ນັ່ງພັກຜ່ອນ. ມີສຽງ 5 = G, ຊ. (ຊ້າຍ) ແມ່ແກ່ ຫຼືແມ່ເຖົ້າ ຫຼືແມ່ເຄົ້າ ມີສຽງ 2 = D.

ຄູ່ທີ 3: ຂ. (ຂວາ) ຮັບທຸ້ງ ມີຄວາມໝາຍຮັບທົ່ງທ້ອງນາ ມີສຽງ 4 = F, ຊ (ຊ້າຍ) ໂປ້ຊ້າຍ ສຽງ 6 = A

4.2.2. ແຄນ 7 ມີ 14 ລູກ ຮູບຮ່າງ ແລະ ຕຳແໜ່ງ ຊື່ແຕ່ລະລູກ ຂຽນເປັນໂນດຕົວໜັງສືສາກົນ




ແຄນ 7 ຂອງເຜົ່າກະຕ່າງ ແລະ ບຣູ ຈາກບ້ານຕຸ້ມລານ
(Khen of Katang/Bru from Tumlan)

ແຄນ 6 ຂອງເຜົ່າຂະມຸ
(Khen 6 of Khmu[2])

ຄູ່ທີ 1: ຂ. ທຸ້ງ (ເຕັມຢຽດ) ຫຼືສຽງທຸ້ງໃຫຍ່ ສຽງ 6 = A, ຊ. ໂປ້ຊ້າຍ (ນິ້ວໂປ້ຊ້າຍ) ສຽງ 1 = C

ຄູ່ທີ 2: ຂ. ແມ່ເຊ ສຽງ1 = C, ຊ. ແມ່ວຽງ ໝາຍເຖິງເມືອງໃຫຍ່ ສຽງ 7 = H.

ຄູ່ທີ 3: ຂ. ສະແນນ (ຫຼືສຽງສຸດສະແນນ) ມີສຽງ 5 = G, ຊ. ແມ່ແກ່ ຫຼືແມ່ເຄົ້າ ມີສຽງ 2 = D.

ຄູ່ທີ 4: ຂ. ຮັບທຸ້ງ ສຽງ 6 = A, ຊ. ແມ່ກ້ອຍຂວາ ສຽງ 3 = E.

---

[2] compare: Miller, Terry, E.: "Laos", in: Southeast Asia, The Garland Encyclopedia of World Music, ed. by Terry E. Miller and Sean Williams, New York/London, 1998, p. 338

ຄູ່ທີ 5: ຂ. ລູກວຽງ ສຽງ 7 = H, ຊ. ແມ່ກ້ອຍຊ້າຍ ສຽງ 4 = F.

ຄູ່ທີ 6: ຂ. ແກ່ນ້ອຍ ສຽງ 2 = D, ຊ. ສະແນນ ສຽງ 5 = ໂຊນ = G.

ຄູ່ທີ 7: ຂ. ກ້ອຍຂວາ ສຽງ 3 = ມີ = E, ຊ. ກ້ອຍຊ້າຍ ສຽງ 4 = ຟາ = F.

### 4.2.3. ແຄນ 8, ແຄນ 9 ມີ 16 ລູກ ແລະ 18 ລູກ:




ແຄນ 8




ແຄນ 9

ແຄນ 8 ແລະ ແຄນ 9 ແຕ່ລະລູກຈະມີຊື່ເໝືອນກັນກັບ ແຄນ 7 ຈະເພີ່ມໃນແຄນ 8 ຄູ່ທີ 8.

ຄູ່ທີ 8: ຂ. ຊັດຂວາ (ຕາມສຽງຂວາ) ມີສຽງ 6 = A, ຊ. ຊັດຊ້າຍ (ຕາມສຽງຊ້າຍ) ມີສຽງ 5 = G.

ສຳລັບແຄນ 9 ກໍ່ຈະເພີ່ມອີກຄູ່ໜຶ່ງຕື່ມແຄນ 8.

ຄູ່ທີ 9: ຂ. ສຽງ 6 = A, ຊ. ສຽງ 1 = ໂດ = C.

ແຄນ ຖ້າບໍ່ມີຮູສຳລັບນິ້ວມືແລ້ວ ຈະບໍ່ສາມາດເປົ່າອອກເປັນສຽງຕາມທີ່ຕ້ອງການ. ເວລາທີ່ເອົານິ້ວມືອັດຕາມຮູແລ້ວເປົ່າ, ສຽງຈຶ່ງຈະດັງອອກມາ. ແຄນທີ່ດີໄດ້ມາດຕະຖານ ຈະມີສຽງອອກມາປີ້ບ ເມື່ອຮູຖືກນິ້ວມືອັດເບົາ ໆ, ສະນັ້ນໝໍແຄນຈະວາງນິ້ວມືໄວປານສາຍຟ້າແລບ.

## 4.2.4. Pitches and sound structures

ໂຄງຮ່າງສຽງແຄນ (ເບິ່ງຕາມຕາຕະລາງສຽງລຸ່ມນີ້)

The tuning of many kinds of Lao music is based on the khen -tuning, which has seven tones per octave, in intervals that match closely those of European diatonic tuning. But we find individual differences as well as a variety of distinct sound structures created through highly refined playing techniques.

| pitches | A | H | C | D | E | F | G | A' | H' | C' | D' | E' | F' | G' | A'' |
|---|---|---|---|---|---|---|---|---|---|---|---|---|---|---|---|
| (relative pitches) | La | Si | Do | Re | Mi | Fa | Sol | La | Si | Do | Re | Mi | Fa | Sol | La |
| number notation | 6 | 7 | 1 | 2 | 3 | 4 | 5 | 6 | 7 | 1 | 2 | 3 | 4 | 5 | 6 |



So, the mentioned pitches can slightly differ from instrument to instrument and the lowest note can vary - according to the size of the instrument - up and down to a minor sixt. Additionally, through using octaves of pitches, which are not exactly in a 1200-Cent distance, special overtones and reflexions are produced. These effects are a part of the general sound structure and do not appear by accident. They make that people "feel" the sound even physically.

### ສຳລັບແຄນ 7, 8 (Pitches)

| Pipes<br>ລູກແຄນ | Pitches<br>ສຽງ ຂຽນດ້ວຍຕົວອັກສອນໂຣມັນ | <br>ສຽງໂນ້ດຕົວເລກ |
|---|---|---|
| ຂ = 1 | A | 6 |
| ຊ = 2 | H | 7 |
| ຂ = 2 | c | 1 |
| ຊ = 3 | d | 2 |
| ຊ = 4 | e | 3 |
| ຊ = 5 | F | 4 |
| ຊ = 6 | g (ຊ້າຍ) | 5 |
| ຂ = 3 | g (ຂວາ) | 5 |

| | | |
|---|---|---|
| ຂ = 4 | a | 6 |
| ຂ = 5 | h | 7 |
| ຊ = 1 | c' | 1' |
| ຂ = 6 | d' | 2' |
| ຂ = 7 | e' | 3' |
| ຊ = 7 | F' | 4' |
| ຊ = 8 | g' | 5' |
| ຂ = 8 | a' | 6' |
| ຂ = | ຂວາ = | Right |
| ຊ = | ຊ້າຍ = | Left |

24/7 ຫ້າມຈຳໜ່າຍ

ເປັນຫຍັງຈິ່ງໃຊ້ A H F ເປັນໂຕໃຫຍ່ ?

ແລະເປັນຫຍັງຈິ່ງໃຊ້ c c' d d' a a' g g' ?

ຄວາມຈິງຕົວອັກສອນສາກົນທີ່ນຳມາໃຊ້ນັ້ນ ໃນນີ້ ເນັ້ນຄຸນຄ່າຂອງຄວາມໝາຍ ສຽງຄວບ ເພາະສຽງຄືກັນ ເພື່ອຮູ້ຕຳແໜ່ງເວລາເປົ່າເອົາສຽງ.

ຕົວອັກສອນ A H F ເອົາຕົວພິມ ຍ້ອນວ່າ: ເວລາຊຽນຄວບກັບອີກຕົວ ຈະແຕກຕ່າງກັນ ບໍ່ຈຳເປັນໃຊ້ເຄື່ອງໝາຍ (" ' ").

<u>ຕົວຢ່າງ</u>:

A = a

H = h

F = f

ແລະ ເວລາມີສຽງຊໍ້າກັນຕ້ອງໃຊ້ຕົວອັກສອນນ້ອຍ ແລະ ເຄື່ອງໝາຍ (" ' ")

<u>ຕົວຢ່າງ</u>:

a = a' = a"

c = c' = c" = c'"

## 4.3. ການເຮັດແຄນ (Khen Making)

ການເຮັດແຄນຢູ່ໃນເມືອງລາວຕັ້ງແຕ່ສະໄໝບູຮານມາເຖິງປັດຈຸບັນກໍ່ຍັງຍຶດແບບຄອງເດີມ ຄື: ເຮັດຢູ່ເຮືອນໃຜເຮືອນລາວ, ຢູ່ຕາມໝູ່ບ້ານ. ຊ່າງແຄນຈະເຮັດແຄນຢູ່ກັບທີ່ ແລະ ເມື່ອເຮັດແລ້ວກໍ່ຂາຍທັນທີໂລດ, ສ່ວນຫລາຍຜູ້ຊື້ແຄນຈະມາສັ່ງເຮັດ.

ຕາມຮີດຄອງປະເພນີສືບທອດມາ, ຊ່າງແຄນຈະເປັນຜູ້ຊາຍ, ແລະ ຜູ້ເຮັດແຄນຈະຕ້ອງໄດ້ຮຽນນຳຄູ, ອາຈານ ຫຼືນຳພໍ່ທີ່ຖ່າຍທອດວິຊາໃຫ້ລູກຊາຍຕໍ່ ໆ ກັນໄປ. ໃນເມື່ອກ່ອນນັ້ນຊ່າງແຄນຈະບໍ່ແມ່ນແຕ່ເຮັດແຄນຢ່າງດຽວ ຍັງເປັນພໍ່ນາ ຫຼືອື່ນ ໆ ອີກ, ການເຮັດແຄນແມ່ນອາຊີບເສີມໃນເວລາຫວ່າງ ຫຼືຕາມລະດູການ, ແຕ່ຈະເອົາແນ່ນອນບໍ່ໄດ້. ໃນສະໄໝປັດຈຸບັນການເຮັດແຄນນັ້ນໄດ້ມີການປ່ຽນແປງຈາກເດີມມາເປັນການຜະລິດອອກຈຳໜ່າຍໃນທ້ອງຕະຫລາດ, ໃນຫ້າງຮ້ານຕ່າງ ໆ (ແຕ່ສ່ວນຫລາຍຈະເປັນແຄນປະເພດເອົາໄປເອ້ຢ້ອງ), ສ່ວນແຄນທີ່ຈະນຳໄປເປົ່າ, ໄປໃຊ້ສຳລັບໝໍແຄນ ຫຼືວົງດົນຕຣີ ແລະ ນຳໄປໃຊ້ໃນພິທີທາງສາສະໜາຕ່າງ ໆ ນັ້ນ ແມ່ນຕ້ອງໄດ້ສັ່ງເຮັດພິເສດ ຈາກຊ່າງແຄນ. ແຕ່ຢ່າງໃດກໍ່ດີ ການເຮັດແຄນຍັງເປັນອາຊີບທັດຖະກຳຂະໜາດຄອບຄົວ.

ເມື່ອເວົ້າເຖິງຊ່າງເຮັດແຄນ ກໍ່ຢາກຈະເວົ້າເຖິງວິທີທາງບູຮານເຄີຍເຮັດມາ (ປັດຈຸບັນອາດຈະເຂົ້າຮ່ຳຮຽນໃນໂຮງຮຽນ ຫຼືນຳຄູທີ່ເຮົາຕ້ອງການຢາກຈະຮຽນຕາມວິທີງ່າຍ ໆ ບໍ່ເຖິງຂັ້ນພິຖີພິຖັນເໝືອນ ເມື່ອກ່ອນ.

ຜູ້ທີ່ຈະຮຽນເຮັດແຄນ, ຂັ້ນທຳອິດ ຈະຕ້ອງແຕ່ງຄາຍ ມີຂັນຫ້າ, ຂັນແປດ, ເງິນຂາວສິດ 6 ກີບ, ສິ້ນ 1 ຜືນ ແລະ ຜ້າແພ 1 ວາ ໄປບູຊາອາຈານ ແລະ ວິນຍານຂອງບຸບພະຈານ ຜູ້ທີ່ສັ່ງສອນວິຊານີ້ມາ. ຫລັງຈາກເວລາໄດ້ຮ່ຳຮຽນເປັນສອງສາມເດືອນແລ້ວ ເຂົາກໍ່ສາມາດເປັນຊ່າງເຮັດແຄນໄດ້. ຊ່າງເຮັດແຄນທຸກຄົນຕ້ອງມີຮ້ານບູຊາໄວ້ບ່ອນເທິງຫົວນອນຂອງຕົນ, ທຸກ ໆ ວັນສິນຊ່າງເຮັດແຄນກໍ່ຈະຫາເຄື່ອງມາສັກກາຣະບູຊາບໍ່ໄດ້ຂາດ, ຫາກວ່າຍາມໃດຊ່າງເຮັດແຄນລືມບູຊາ "ວິນຍານແຄນ" ເຂົາຈະຮູ້ສຶກວ່າບໍ່ຢູ່ດີມີແຮງ.

ສ່ວນຫລາຍຊ່າງເຮັດແຄນຝີມືຊັ້ນຊຽນທີ່ມີອາຍຸແກ່ແດ່ແລ້ວແມ່ນໄດ້ສືບທອດວິຊາເຮັດແຄນ ດັ່ງທີ່ກ່າວມາຂ້າງເທິງນີ້ທັງໝົດ; ຍັງມີບາງຄົນເລົ່າໃຫ້ຟັງວ່າ: ບາງເທື່ອລື້ມຫາຍຕາຍຈາກໂດຍບໍ່ໄດ້ຖ່າຍທອດວິຊາໃຫ້ລູກ ໆ ຫລານ ໆ ເພາະວ່າມັນແພ້ຕົນເອງ; ເວລາທີ່ຍັງມີເຫື່ອແຮງກໍ່ບໍ່ທັນຢາກຖ່າຍທອດ, ພຽງແຕ່ແອບເຮັດນັ້ນເຮັດນີ້ໄປ, ຖ້າຫາກເມື່ອໃດຜູ້ຖ່າຍທອດ ວິຊາໃຫ້ໝົດກົກໝົດປາຍແລ້ວ, ມັນມັກຈະແພ້ຜູ້ນັ້ນກໍ່ຈະເສຍຊີວິດໄປ (ອາຍຸສັ້ນ) ສະນັ້ນ ຈະສັງເກດຊ່າງເຮັດແຄນຈະຢູ່ຈົນເຖົ້າຈົນແກ່ຈຶ່ງຖ່າຍທອດວິຊາໃຫ້ລູກຫລານ ແລ້ວຕົນກໍ່ຈາກໄປ; ດັ່ງນັ້ນການໄປຂໍຮຽນນຳ ຈຶ່ງມີການຕັ້ງຄາຍສູງເພື່ອບໍ່ໃຫ້ມັນແພ້ຜູ້ສອນ.

# ຂໍໂທດຫຼາຍໆ

ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...



ດ້ວຍຄວາມຮັກແພງ